ຜູ້ແທນປະຊາຊົນ
PHOUTHEN PASAXON
ສຽງຂອງສະພາແຫ່ງຊາດ
ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na
25-28 ສິງຫາ 2022
ປີທີ 11
ສະບັບທີ 870

# ປະທານສະພາແຫ່ງຊາດ ສຳເລັດການເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກ ຢູ່ແຂວງຫລວງນ້ຳທາ



(ສພຊ) ເພື່ອເປັນການສືບຕໍ່ປະຕິບັດຕາມແຜນການເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ສອງແຂວງພາກເໜືອ (ແຂວງອຸດົມໄຊ ແລະ ແຂວງຫລວງນ້ຳທາ) ໃນລະຫວ່າງວັນທີ 16-18 ສິງຫາ 2022 ທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ສຳເລັດການເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງຫລວງນ້ຳທາ ໂດຍການຕ້ອນຮັບຂອງທ່ານ ຄຳໄຫລ ສີປະເສີດ ກຳມະການສູນກາງພັກ, ເລຂາຄະນະພັກແຂວງເຈົ້າແຂວງຫລວງນ້ຳທາ ແລະ ທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ພ້ອມດ້ວຍສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ.

ໃນການເຄື່ອນໄຫວຄັ້ງນີ້, ທ່ານ ປອ. ໄຊສົມພອນ ພົມວິຫານ ພ້ອມດ້ວຍຄະນະ ໄດ້ໄປຢ້ຽມຢາມເມືອງສິງ ແຂວງຫລວງນ້ຳທາ ໂດຍການຕ້ອນຮັບຂອງທ່ານ ຈັນພິພັກ ກອງຈຳປາ ເລຂາພັກເມືອງ, ເຈົ້າເມືອງສິງ ແລະ ໄດ້ໄປຢ້ຽມຢາມໂຄງການຊົນລະປະທານອ່າງເກັບນ້ຳຢ້າ ທີ່ໄດ້ຮັບການຊ່ວຍເຫລືອຈາກ ສສ.ຫວຽດນາມ; ຢ້ຽມຢາມຄອບຄົວຕົວແບບຜະລິດກະສິກຳ, ອຸດສາຫະກຳ, ກຸ່ມຜະລິດ ຫລື ສະຫະກອນ; ຢ້ຽມຢາມສະຖານທີ່ໂຄງການກະສິກຳ, ອຸດສາຫະກຳ, ບໍລິການ ແລະ ການທ່ອງທ່ຽວ ຢູ່ເຂດບ້ານອຸດົມສິນ ແລະ ບ້ານນ້ຳແດດສົມບຸນ ເມືອງສິງ ແຂວງຫລວງນ້ຳທາ; ຈາກນັ້ນ, ໄດ້ເຮັດວຽກຮ່ວມກັບຄະນະນຳຂອງເມືອງ ຢູ່ຫ້ອງປະຊຸມຫ້ອງວ່າການປົກຄອງເມືອງ ເພື່ອຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງໂດຍຫຍໍ້; ພ້ອມນີ້, ຍັງໄດ້ນຳເອົາເຄື່ອງອຸປະກອນການຮຽນ, ເຄື່ອງນຸ່ງຫົ່ມ ມອບໃຫ້ອົງການປົກຄອງເມືອງສິງ.

ວັນທີ 18 ສິງຫາ 2022 ຄະ

ອ່ານຕໍ່ໜ້າ 2

# ສະພາແຫ່ງຊາດ ເຜີຍແຜ່ 2 ວັນສຳຄັນຂອງຊາດ



(ສພຊ) ໃນວັນທີ 23 ສິງຫາ 2022, ສະພາແຫ່ງຊາດ ໄດ້ເຜີຍແຜ່ວັນລັດຖະທຳມະນູນ ຄົບຮອບ 31 ປີ (15/8/1991-15/8/2022) ແລະ ວັນຍຶດອຳນາດ 23 ສິງຫາ (23/8/1945-23/8/2022) ໂດຍການເຜີຍແຜ່ຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ, ໂດຍມີບັນດາຄະນະບໍລິຫານງານພັກສະພາແຫ່ງຊາດ, ຄະນະພັກຣາກຖານ,

ອ່ານຕໍ່ໜ້າ 7

# ຍົກສູງກົນໄກຈັດສັນງົບປະມານ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ຂົງເຂດ ກຜງສ



ໜ້າ 3

# ຄລສ ລາວ ແລະ ຫ້ອງວ່າການສະພາແຫ່ງຊາດ ຫວຽດນາມ ແລກປ່ຽນບົດຮຽນຮ່ວມກັນ



(ສພຊ) ໃນລະຫວ່າງວັນທີ 19-22 ສິງຫາ 2022 ຄະນະຜູ້ແທນຄະນະເລຂາທິການສະພາແຫ່ງຊາດ (ຄລສ) ແຫ່ງ ສປປລາວ ນຳໂດຍສະຫາຍນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ເລຂາທິການສະພາແຫ່ງຊາດລາວ ໄດ້ເຂົ້າຮ່ວມກອງປະຊຸມສຳມະນາແລກປ່ຽນບົດຮຽນ ຄັ້ງທີ XI ລະຫວ່າງຄະນະເລຂາທິການສະພາແຫ່ງຊາດລາວ ແລະ ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ທີ່ໄດ້ຈັດຂຶ້ນທີ່ແຂວງກວາງບິງ ສສ.ຫວຽດນາມ.

ທັງນີ້, ກໍແມ່ນການຈັດຕັ້ງຜັນຂະຫຍາຍເນື້ອໃນບົດບັນທຶກວ່າດ້ວຍການຮ່ວມມື ລະຫວ່າງສອງສະພາແຫ່ງຊາດລາວ-ຫວຽດນາມ, ບົດບັນທຶກວ່າດ້ວຍການຮ່ວມມື ລະຫວ່າງຄະນະເລຂາທິການສະພາແຫ່ງຊາດລາວ ແລະ ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ສະບັບປີ 2017 ແລະ ສະບັບລົງວັນທີ 16 ພຶດສະພາ 2022 ກໍຄືບົດບັນທຶກຜົນຂອງກອງປະຊຸມພົບປະແລກປ່ຽນບົດຮຽນ ຄັ້ງທີ X ທີ່ແຂວງຊຽງຂວາງ ໃນປີ 2019 ແລະ ຍັງເປັນກິດຈະກຳໜຶ່ງທີ່ສຳຄັນຂອງສອງສະພາແຫ່ງຊາດ ໃນການປະກອບສ່ວນສະເຫລີມສະຫລອງສອງວັນປະຫວັດສາດ ຂອງສອງປະ

ອ່ານຕໍ່ໜ້າ 2

# ຫລາຍບັນຫາສຳຄັນຖືກຮັບຮອງເອົາໃນກອງປະຊຸມ ສພຂ ບໍລິຄຳໄຊ



(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ຊຸດທີ II ໄດ້ອັດລົງດ້ວຍຜົນສຳເລັດອັນຈົບງາມໃນວັນທີ 12 ສິງຫາຜ່ານມາ, ພາຍຫລັງທີ່ດຳເນີນມາເປັນເວລາ 2 ວັນເຄິ່ງ ໂດຍການເປັນປະທານຂອງທ່ານ ສຸວັນນີ ໄຊຊະນະ ປະທານ ສພຂ, ສະມາຊິກສະພາແຫ່ງຊາດປະຈຳເຂດ

ອ່ານຕໍ່ໜ້າ 7

# ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຽງຂວາງ




ໜ້າ 3



ໜ້າ 4



ໜ້າ 4



ໜ້າ 4



ໜ້າ 3



ໜ້າ 5



ໜ້າ 5

ຊົມເຊີຍວັນຍຶດອຳນາດ ຄົບຮອບ 47 ປີ (23/8/1975-23/8/2022) ຢ່າງສຸດໃຈ!



## ຍົກສູງ...

(ສພຊ) ເພື່ອສ້າງຄວາມເຂັ້ມແຂງ ບົດຮຽນການຍົກສູງກົນໄກຈັດສັນງົບປະມານ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃນຂົງເຂດກຳມາທິການແຜນການ, ການເງິນ ແລະ ການກວດສອບ (ກຜງສ) ໃຫ້ແກ່ພະນັກງານວິຊາການ ຂອງ ກຜງສ ສະພາແຫ່ງຊາດ, ເພື່ອປຶກສາຫາລືແຜນການຄົ້ນຄວ້າ ແລະ ສືບຕໍ່ສ້າງປຶ້ມຄູ່ມື ໃນຂົງເຂດແຜນການ, ການເງິນ ແລະ ການກວດສອບ, ເພື່ອຮັບປະກັນເນື້ອໃນຂອງຜົນການຄົ້ນຄວ້າ ແລະ ຄຸນນະພາບຂອງປຶ້ມຄູ່ມື ແລະ ເພື່ອຍາດແຍ່ງເອົາບົດຮຽນ ແລະ ປະສົບການຈາກ ພາຍໃນ ແລະ ຕ່າງປະເທດ ກ່ຽວກັບກົນໄກຈັດສັນງົບປະມານ ລະຫວ່າງສູນກາງ ແລະ ທ້ອງຖິ່ນ, ການຄົ້ນຄວ້າ ແລະ ສ້າງປຶ້ມຄູ່ມື ໃນຂົງເຂດ ກຜງສ. ໃນລະຫວ່າງວັນທີ 19-20 ສິງຫາ 2022 ທີ່ເມືອງວັງວຽງ ແຂວງວຽງຈັນ ກຳມາທິການແຜນການ, ການເງິນ ແລະ ການກວດສອບ ໄດ້ຈັດກອງປະຊຸມສຳມະນາການຍົກສູງກົນໄກຈັດສັນງົບປະມານ ລະຫວ່າງສູນກາງ ແລະ ທ້ອງຖິ່ນ, ການຄົ້ນຄວ້າ ແລະ ສ້າງປຶ້ມຄູ່ມື ໃນຂົງເຂດ ກຜງສ ໂດຍການເປັນປະທານຂອງທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ; ມີບັນດາທ່ານຮອງປະທານກຳມາທິການດັ່ງກ່າວ, ຫົວໜ້າພະແນກນະໂຍບາຍເສດຖະກິດມະຫາພາກສະຖາບັນຄົ້ນຄວ້າເສດຖະກິດ-ສັງຄົມແຫ່ງຊາດ, ຜູ້ອຳນວຍການຈາກສະຖາບັນສະຖາບັນການເງິນຈຸລະພາກ, ຄະນະບໍດີຄະນະເສດຖະສາດ ມະຫາວິທະຍາໄລແຫ່ງຊາດ, ບັນດາຫົວ-ຮອງຫົວໜ້າພາກວິຊາ, ຫົວໜ້າພະແນກ ແລະ ນັກຄົ້ນຄວ້າຈາກຄະນະເສດຖະສາດ ແລະ ພະນັກງານ-ລັດຖະກອນຈາກສະພາແຫ່ງຊາດ ເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ນັກສຳມະນາກອນໄດ້ຮັບຟັງການນຳສະເໜີ ແລະ ບັນຍາຍເນື້ອໃນຂອງເອກະສານຈາກບັນດາອາຈານ ແລະ ນັກຄົ້ນຄວ້າ ທີ່ມີຄວາມຮູ້ຄວາມສາມາດ ເຊິ່ງປະກອບມີ 9 ຫົວຂໍ້ຄື: ລາຍງານແຜນການຄົ້ນຄວ້າ ແລະ ສ້າງປຶ້ມຄູ່ມືໃນຂົງເຂດແຜນການ, ການເງິນ ແລະ ການກວດສອບ; ລາຍງານຜົນການຄົ້ນຄວ້າເບື້ອງຕົ້ນ ຫົວຂໍ້: ປະເມີນຜົນການປະຕິບັດນະໂຍບາຍການເງິນ-ງົບປະມານ; ລາຍງານຜົນການຄົ້ນຄວ້າເບື້ອງຕົ້ນ ຫົວຂໍ້: ການປະເມີນຜົນນະໂຍບາຍເງິນຕາ, ທະນາຄານ ແລະ ສະຖາບັນການເງິນ; ລາຍງານຜົນການຄົ້ນຄວ້າເບື້ອງຕົ້ນຫົວຂໍ້: ການປະເມີນປະສິດທິພາບ ແລະ ປະສິດທິຜົນ 4 ແຫລ່ງທຶນຂອງການພັດທະນາ; ລາຍງານໂຄງຮ່າງການຂຽນປຶ້ມຄູ່ມື ຫົວຂໍ້: ການພິຈາລະນາ ແລະ ການຮັບຮອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ການຄຸ້ມຄອງການລົງທຶນຂອງລັດ ແລະ ການລົງທຶນເອກະຊົນ; ລາຍງານໂຄງຮ່າງການຂຽນປຶ້ມຄູ່ມື ຫົວຂໍ້: ຫລັກການພື້ນຖານສະຖິຕິ ແລະ ວິທະຍາການວິໄຈສຳລັບແຜນການ, ການລົງທຶນ, ການເງິນ, ເງິນຕາ, ກວດສອບ ແລະ ກວດກາ; ລາຍງານໂຄງຮ່າງການຂຽນປຶ້ມຄູ່ມື ຫົວຂໍ້: ການພິຈາລະນາ ແລະ ການຮັບຮອງແຜນງົບປະມານແຫ່ງລັດ, ການດຸນດ່ຽງ ແລະ ແຜນການຊຳລະໜີ້ສິນ; ລາຍງານໂຄງຮ່າງການຂຽນປຶ້ມຄູ່ມື ຫົວຂໍ້: ການພິຈາລະນາ ແລະ ການຮັບຮອງແຜນເງິນຕາ, ທະນາຄານ ແລະ ສະຖາບັນການເງິນ; ລາຍງານໂຄງຮ່າງການຂຽນປຶ້ມຄູ່ມື ຫົວຂໍ້: ການພິຈາລະນາຮັບຮອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ, ການຮ່າງບົດປະກອບຄຳເຫັນ, ການສ້າງຮ່າງມະຕິ, ຄຳຖາມເຈາະຈີ້ມ, ຄຳຊັກຖາມ ແລະ ບົດແນະນຳໃນຂົງເຂດແຜນການ, ງົບປະມານ, ການເງິນ, ການກວດສອບ ແລະ ກວດກາລັດ.

ໂອກາດດັ່ງກ່າວ, ທ່ານ ປອ. ລີເບີ ລີບົວປາວ ໄດ້ມີຄຳເຫັນຕໍ່ກອງປະຊຸມວ່າ: ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນສືບຕໍ່ຈາກກອງປະຊຸມຄັ້ງກ່ອນ ເພື່ອສະເໜີບົດຄົ້ນຄວ້າກ່ຽວກັບການປະເມີນແຜນການປະຕິບັດແຜນງານເສດຖະກິດ-ສັງຄົມ ແລະ ງົບປະມານ ແລະ ເພື່ອສ້າງປຶ້ມຄູ່ມືຮັບໃຊ້ວຽກງານຂອງສະພາແຫ່ງຊາດໂດຍສະເພາະໃນຂົງເຂດແຜນການ, ການເງິນ ແລະ ການກວດສອບ; ພ້ອມນັ້ນ, ຍັງເນັ້ນຕໍ່ນັກສຳມະນາກອນທຸກທ່ານ ໃຫ້ຍົກສູງສະຕິຄວາມຮັບຜິດຊອບຂອງຕົນໃນການປະກອບຄຳຄິດຄຳເຫັນທີ່ບັນດານັກຄົ້ນຄວ້າຫລື ບັນດາອາຈານສະເໜີແຕ່ລະຫົວຂໍ້ຢ່າງກົງໄປກົງມາ ເພື່ອໃຫ້ໄດ້ເນື້ອໃນທີ່ສົມບູນທີ່ສຸດ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນຈາກແຜນງານການມີສ່ວນຮ່ວມຂອງປະຊາຊົນຕໍ່ວຽກງານການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ (ແຜນງານເຊກາ).

(ນາງ ອານິຕາ ມ່ວນສະຫວັດ)

# ຂະບວນຊາວໜຸ່ມຕອບແທນບຸນຄຸນ ຢ້ຽມຢາມສູນເສຍອົງຄະພິເສດ 790

(ສພຊ) ເພື່ອສະແດງເຖິງຄວາມກະຕັນຍູຮູ້ບຸນຄຸນ ຄຸນງາມຄວາມດີ ດັ່ງຄຳສຸພາສິດລາວ ທີ່ວ່າ: “ໄດ້ກິນນ້ຳ ບໍ່ລືມບໍ່, ໄດ້ກິນໜໍ່ ບໍ່ລືມລຳ, ມີຄວາມຮູ້ ບໍ່ລືມຄູຜູ້ສອນສັ່ງ, ຍ້ອນມີພວກເພິ່ນໃນວັນນັ້ນ ຈຶ່ງມີພວກເຮົາໃນວັນນີ້, ໃນວັນທີ 18 ສິງຫາ 2022 ທີ່ສູນເສຍອົງຄະພິເສດ 790, ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ຊາວໜຸ່ມ ກະຊວງສາທາລະນະສຸກ ຮ່ວມກັບຊາວໜຸ່ມນະຄອນຫລວງ ແລະ ກະຊວງ-ອົງການອ້ອມຂ້າງສູນກາງ ໄດ້ຈັດຂະບວນການຊາວໜຸ່ມຕອບບຸນແທນຄຸນພະນັກງານນັກຮົບປະຕິວັດ, ກິດຈະກຳດັ່ງກ່າວພາຍໃຕ້ຫົວຂໍ້“ຜົນງານຂອງທ່ານຄືມູນເຊື້ອຂອງຊາວໜຸ່ມຜູ້ສືບທອດ” ເຂົ້າຮ່ວມໃນພິທີມີສະຫາຍ ທອງຈັນ ພູມີພົນ, ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫາຍ ດຣ. ໄພວັນ ແກ້ວປະເສີດ ຮອງລັດຖະມົນຕີກະຊວງສາທາລະນະສຸກ, ສະຫາຍ ພັທ. ບຸນມີ ອິນທະວົງສາ ຫົວໜ້າການເມືອງສູນເສຍອົງຄະ 790, ສະຫາຍ ໄກມະນີ ເທບບົວລີ ຮອງເລຂາຄະນະບໍລິຫານຊາວໜຸ່ມສະພາແຫ່ງຊາດ ຕາງໜ້າຈາກຄະນະບໍລິຫານງານຊາວໜຸ່ມ ສະພາແຫ່ງຊາດ ພ້ອມດ້ວຍຄະນະ; ມີບັນດາທ່ານ ຫົວໜ້າຫ້ອງການ, ກົມກອງອ້ອມຂ້າງສູນກາງຊາວໜຸ່ມ, ບັນດາຄະນະບໍລິຫານງານຊາວໜຸ່ມຕະຫລອດຮອດສະມາຊິກຊາວໜຸ່ມນະຄອນຫລວງ, ກະຊວງ-ອົງການທຽບເທົ່າອ້ອມຂ້າງສູນກາງ, ພິເສດແມ່ນຊາວໜຸ່ມທີ່ຢູ່ໃນຂົງເຂດ ສາທາລະນະສຸກ ເຂົ້າຮ່ວມຂະບວນການຢ່າງຕັ້ງໜ້າ.

ໃນຂະບວນການຄັ້ງນີ້ປະກອບມີຫລາກຫລາຍກິດຈະກຳ ເປັນຕົ້ນ: ຢ້ຽມຢາມຖາມຂ່າວ ໃຫ້ຄວາມອົບອຸ່ນ ຕໍ່ຄອບຄົວ ກໍຄືບຸກຄົນ ທີ່ໄດ້ອຸທິດຕົນທາງດ້ານຮ່າງກາຍ, ສະຕິປັນຍາໃນການຕໍ່ສູ້ກູ້ຊາດໃນເມື່ອກ່ອນ ເພື່ອຕໍ່ສູ້ກອບກູ້ເອົາເອກະລາດ, ອິດສະຫລະພາບມາໃຫ້ພວກເຮົາໄດ້ຢູ່ເຢັນເປັນສຸກໃນສູ່ມື້ນີ້, ຢ້ຽມຢາມໃຫ້ກຳລັງໃຈ ຜູ້ທີ່ນອນປິ່ນປົວຢູ່ໃນໂຮງໝໍພາຍໃນສູນເສຍອົງຄະພິເສດ 790, ການໃຫ້ບໍລິການກວດສຸຂະພາບໃຫ້ບັນດາລຸງ-ປ້າ, ອາວ-ອາ ພາຍໃນສູນ, ສັກຢາວັກຊີນປ້ອງກັນໂຄວິດ-19; ນອກນັ້ນ, ຍັງໄດ້ນຳເອົາເຄື່ອງບໍລິໂພກ, ອຸປະໂພກ ແລະ ເງິນສົດ ຈຳນວນໜຶ່ງມອບໃຫ້ອີກດ້ວຍ.





## ກອງປະຊຸມ...

(ສພຊ) ໃນລະຫວ່າງວັນທີ 2-4 ສິງຫາຜ່ານມາ, ທີ່ຫ້ອງປະຊຸມໃຫຍ່ຫ້ອງວ່າການແຂວງ ໄດ້ເປີດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວວງຊຽງຂວາງ ຊຸດທີ II ໂດຍການເປັນປະທານ ຂອງທ່ານ ບຸນໂຮມ ເທດທານີ ປະທານສະພາປະຊາຊົນແຂວງ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ບຸນຈັນ ສີວົງພັນ ເຈົ້າແຂວງໆຊຽງຂວາງ, ມີບັນດາທ່ານການນຳ, ອະດີດການນຳພັກ-ລັດ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 9, ສະມາຊິກສະພາປະຊາຊົນແຂວງ, ຄະນະປະຈຳພັກແຂວງ, ຫົວໜ້າພະແນກ, ອົງການລັດທຽບເທົ່າພະແນກ, ແນວລາວສ້າງຊາດ, ອົງການຈັດຕັ້ງຕັ້ງມະຫາຊົນ, ສະຫະພັນນັກຮົບເກົ່າ, ກອງບັນຊາການທະຫານແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ສະຖາບັນການສຶກສາ, ລັດວິສາຫະກິດພາຍໃນແຂວງ ແລະນັກທຸລະກິດຂອງແຂວງ ເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງບົດລາຍງານໂດຍສັງເຂບຂອງທ່ານເຈົ້າແຂວງກ່ຽວກັບສະພາບພົ້ນເດັ່ນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022, ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການລົງທຶນແຫ່ງລັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022, ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂັ້ນແຂວງ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022, ບົດລາຍງານການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ($SDG_s$) ຂອງພະແນກສຶກສາທິການ ແລະກິລາ ບົດລາຍງານການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ($SDG_s$) ຂອງພະແນກສາທາລະນະສຸກ, ບົດລາຍງານການຈັດຕັ້ງປະຕິບັດແຜນການທ່ອງທ່ຽວຕິດພັນກັບການປ້ອງກັນ ແລະ ຄວບຄຸມ, ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ19, ບົດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ບົດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ບົດລາຍງານວຽກງານການປັບປຸງກົງຈັກການຈັດຕັ້ງຂອງອົງການປົກຄອງແຂວງ, ບົດລາຍງານການກະກຽມຄວາມພ້ອມເປັນເຈົ້າພາບງານມະຫາກຳກິລາແຫ່ງຊາດຄັ້ງທີ XI, ບົດລາຍງານຂອງຄະນະປະຈຳສະພາປະຊາຊົນແຂວງກ່ຽວກັບການເຄື່ອນໄຫວວຽກງານໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງຊຸດທີ II ໃນທ້າຍປີ 2022, ນອກຈາກນີ້ຍັງໄດ້ພິຈາລະນາ ແລະ ຮັບຮອງເອົານິຕິກຳໃຕ້ກົດໝາຍ 1 ສະບັບຄື: ຂໍ້ຕົກລົງວ່າດ້ວຍການສົ່ງເສີມ, ຄຸ້ມຄອງການລົງທຶນພາຍໃນແລະຕ່າງປະເທດ; ໃນວາລະດຳເນີນກອງປະຊຸມບັນດາຄະນະປະຈຳສະພາປະຊາຊົນແຂວງ ຍັງໄດ້ປະກອບຄຳເຫັນໃສ່ບົດລາຍງານການເຄື່ອນໄຫວວຽກງານຂອງແຕ່ລະພາກສ່ວນ ເຊິ່ງຕະຫລອດໄລຍະການດຳເນີນກອງປະຊຸມເຫັນວ່າບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງຂອງຕົນ, ສຸມສະຕິປັນຍາຄົ້ນຄວ້າ, ປະກອບຄຳຄິດເຫັນ ແລະ ຕັ້ງຄຳຊັກຖາມຢ່າງກົງໄປກົງມາ, ຖືກຕ້ອງ, ສອດຄ່ອງກັບສະພາບຕົວຈິງ

ໃນຕອນທ້າຍ, ທ່ານ ບຸນໂຮມ ເທດທານີ ໄດ້ມີຄຳເຫັນໂອ້ລົມຕໍ່ທີ່ປະຊຸມເຊິ່ງທ່ານໄດ້ຮຽກຮ້ອງມາຍັງອົງການປົກຄອງແຂວງ ເອົາໃຈໃສ່ຊີ້ນຳທຸກຂົງເຂດວຽກງານ, ພ້ອມກັນຈັດຕັ້ງປະຕິບັດບັນດາມະຕິ ແລະ ບັນດາຄາດໝາຍຕ່າງໆທີ່ວາງໄວ້ໃຫ້ສຳເລັດ; ຄຽງຄູ່ກັນນັ້ນ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງຕ້ອງສືບຕໍ່ຊຸກຍູ້, ຕິດຕາມກວດກາທຸກຂົງເຂດວຽກງານ ເພື່ອໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້, ຍັງຮຽກຮ້ອງມາຍັງບັນດາທ່ານຜູ້ແທນກອງປະຊຸມຈົ່ງພ້ອມກັນຈັດຕັ້ງປະຕິບັດພາລະບົດບາດ, ສິດ-ໜ້າທີ່ ແລະ ພັນທະຂອງຕົນດ້ວຍຄວາມຮັບຜິດຊອບສູງ ເພື່ອຮັບປະກັນໃຫ້ແຂວງສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບເປັນລະບຽບຮຽບຮ້ອຍ, ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ.

(ນາງ ສຸກສະຫວັນ ອິນທະແສງ)

## ສສຊ-ສສຂ ໄຊສົມບູນ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຢູ່ເມືອງລ້ອງຊານ



(ສພຊ) ເພື່ອເປັນການຜັນຂະຫຍາຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນ (ສພຂ) ແຂວງໄຊສົມບູນ ຊຸດທີ II ໃຫ້ສັງຄົມໄດ້ຮັບຮູ້ຢ່າງກວ້າງຂວາງ; ໃນລະຫວ່າງວັນທີ 9-12 ສິງຫາ 2022 ນຳພາທີມງານໂດຍທ່ານ ແດງ ປະທຸມທອງ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ, ປະທານ ສພຂ ໄຊສົມບູນ, ທ່ານ ສົມພົນ ສີສົມບຣິງ ສສຂ ປະຈຳເມືອງລ້ອງຊານ ພ້ອມດ້ວຍຄະນະ ສົມທົບກັບເລຂາພັກເມືອງ ເຈົ້າເມືອງລ້ອງຊານ ພ້ອມດ້ວຍຄະນະປະຈຳພັກເມືອງລ້ອງຊານ ໄດ້ນຳພາ-ຊີ້ນຳ ແລະ ສາມາດເຮັດໃຫ້ຜູ້ແທນ ໄດ້ໃກ້ຊິດຕິດແທດກັບພໍ່ແມ່ປະຊາຊົນລາວບັນດາເຜົ່າຫລາຍຂຶ້ນ ຢ່າງສະດວກ ເຊິ່ງໄດ້ເຄື່ອນໄຫວຢູ່ເທສະບານເມືອງ ເປັນຕົ້ນແມ່ນອົງການປົກຄອງເມືອງລ້ອງຊານ, ປ້ອງກັນຊາດ-ປ້ອງຄວາມສະຫງົບ ທີ່ສະໂມສອນເມືອງລ້ອງຊານ ໃນການລົງໃນຄັ້ງນີ້ ມີຈຳນວນ 25 ບ້ານທົ່ວເມືອງລ້ອງຊານ.

ການເຄື່ອນໄຫວໃນຄັ້ງນີ້ ສສຊ-ສສຂ ໄດ້ນຳເອົາຂ່າວ, ເອກະສານທີ່ສຳຄັນຈຳນວນໜຶ່ງ ແລະ ເນື້ອໃນໃຈຄວາມທີ່ມີຄວາມໝາຍ, ຄວາມສຳຄັນ ທີ່ໄດ້ພິຈາລະນາ ແລະ ຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ແລະ ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ໄຊສົມບູນ ຊຸດທີ II ໄປຈັດຕັ້ງຜັດຂະຫຍາຍ ແລະ ໂຄສະນາເຜີຍແຜ່ ໃຫ້ພໍ່ແມ່ປະຊາຊົນລາວບັນດາເຜົ່າທົ່ວເມືອງລ້ອງຊານ ຮັບຮູ້ຢ່າງທົ່ວເຖິງກັນ; ພາຍຫລັງທີ່ທ່ານ ສສຊ-ສສຂ ໄດ້ເຜີຍແຜ່ເອກະສານແລ້ວ ພໍ່ແມ່ປະຊາຊົນລາວບັນດາເຜົ່າ ກໍໄດ້ໃຫ້ຄວາມສຳຄັນຕໍ່ກັບຜູ້ແທນ ແບບເປັນກັນເອງ ໃຫ້ໂອກາດໂອ້ລົມ, ແລກປ່ຽນບົດຮຽນຕໍ່ກັບກັບຂໍ້ຂ້ອງໃຈ ແລະ ບັນຫາທີ່ຄ້າງຄາ ສ່ວນຫລາຍແລ້ວປະຊາຊົນຈະມີຄຳຖາມແບບເປັນຄຳສະເໜີທີ່ເກີດຈາກປາກົດການຫຍໍ້ທໍ້ກັບສັງຄົມໃນປັດຈຸບັນ ເປັນສ່ວນຫລາຍເພື່ອໃຫ້ຂັ້ນເທິງນຳເອົາໄປພິຈາລະນາແກ້ໄຂຕາມທີ່ຄວນ; ໃນທາມກາງຜູ້ແທນ ແລະ ປະຊາຊົນໄດ້ໂອ້ລົມກັນນັ້ນ ບາງບັນຫາ ສສຊ-ສສຂ ກໍໄດ້ອະທິບາຍ ແລະ ຊີ້ແຈງຕາມຄາມເປັນຈິງໃຫ້ພໍ່ແມ່ປະຊາຊົນຮັບຮູ້ ແລະ ບາງບັນຫາກໍຈະນຳເອົາໄປສະເໜີຕໍ່ຂັ້ນເທິງອີກ ເພື່ອໃຫ້ພໍ່ແມ່ປະຊາຊົນລາວບັນດາເຜົ່າຫລຸດພົ້ນຈາກຄວາມທຸກຍາກ.

ຕອນທ້າຍ, ທ່ານ ແດງ ປະທຸມທອງ ໄດ້ສະແດງຄວາມຂອບໃຈບັນດາທ່ານ ທີ່ໄດ້ເຂົ້າຮ່ວມຮັບຟັງການລົງເຜີຍແຜ່ຜົນສຳເລັດກອງປະຊຸມໃນຄັ້ງນີ້ ແລະ ອວຍພອນໃຫ້ບັນດາທ່ານຈົ່ງມີຄວາມຜາສຸກໃນສ່ວນໂຕ ແລະ ຄອບຄົວ, ມີຜົນສຳເລັດໃນໜ້າທີ່ວຽກງານທຸກປະການ.

(ແສງຕາວັນ ລັດຕະນະວົງ)

## ປາຖະກະຖາວັນປະກາດໃຊ້ລັດຖະທຳມະນູນ ແລະ ວັນສ້າງຕັ້ງສານປະຊາຊົນ ແຫ່ງ ສປປລາວ



(ສພຊ) ຕອນເຊົ້າຂອງວັນທີ 15 ສິງຫາ 2022 ຢູ່ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ (ສພຂ) ຫລວງນໍ້າທາ ໄດ້ຈັດພິທີປາຖະກະຖາວັນປະກາດໃຊ້ລັດຖະທຳມະນູນແຫ່ງ ສປປ ລາວ ຄົບຮອບ 31 ປີ (15 ສິງຫາ 1991-15 ສິງຫາ 2022), ວັນສ້າງຕັ້ງສານປະຊາຊົນແຫ່ງ ສປປລາວ ຄົບຮອບ 40 ປີ (15 ສິງຫາ 1982-15 ສິງຫາ 2022) ໂດຍການປາຖະກະຖາຂອງທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ, ປະທານ ສພຂ ຫລວງນໍ້າທາ, ເຂົ້າຮ່ວມຮັບຟັງໃນພິທີຄັ້ງນີ້, ມີບັນດາທ່ານ ສສຊ, ສສຂ, ຄະນະນຳຂົງເຂດນິຕິບັນຍັດ ແລະ ຕຸລາການ, ຜູ້ຕາງໜ້າຈາກຫ້ອງວ່າການແຂວງ, ຫົວໜ້າ, ຮອງຫົວໜ້າຂະແໜງ ຕະຫລອດຮອດພະນັກງານ-ລັດຖະກອນຈາກ 4 ຂົງເຂດເຂົ້າຮ່ວມທັງໝົດ 44 ທ່ານ ຍິງ 17 ທ່ານ.

ໃນພິທີ, ໄດ້ຮັບຟັງປະຫວັດຄວາມເປັນມາ, ຄວາມໝາຍຄວາມສຳຄັນ ແລະ ຜົນການຈັດຕັ້ງປະຕິບັດລັດຖະທຳມະນູນແຫ່ງ ສປປລາວ ໃນໄລຍະ 31 ປີຜ່ານມາ ທັງນີ້, ກໍເພື່ອເປັນການເພີ່ມທະວີການໂຄສະນາເຜີຍແຜ່, ສຶກສາອົບຮົມສະມາຊິກພັກ, ພະນັກງານ-ລັດຖະກອນ ໃນ 4 ຂົງເຂດ ໃຫ້ຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ແລະ ທົ່ວເຖິງກ່ຽວກັບຄວາມໝາຍຄວາມສຳຄັນຂອງລັດຖະທຳມະນູນແຫ່ງ ສປປລາວ ແລະ ການຄຸ້ມຄອງລັດຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ ເຊິ່ງລັດຖະທຳມະນູນແຫ່ງ ສປປລາວ ແມ່ນກົດໝາຍພື້ນຖານຂອງຊາດ ໂດຍເປັນການຫັນເອົາ ແນວທາງນະໂຍບາຍປ່ຽນແປງໃໝ່ ຢ່າງຮອບດ້ານ ແລະ ມີຫລັກການຂອງພັກປະຊາຊົນ ປະຕິວັດລາວ ມາເປັນກົດໝາຍພື້ນຖານ ຂອງລະບອບປະຊາທິປະໄຕ ປະຊາຊົນລາວ; ລັດຖະທຳມະນູນແຫ່ງ ສປປລາວ ໄດ້ຖືກຮັບຮອງເອົາໃນກອງປະຊຸມເທື່ອທີ 4 ຂອງສະພາປະຊາຊົນສູງສຸດ ຊຸດທີ II ໃນປີ 1991 ແລະ ໄດ້ປະກາດໃຊ້ຢ່າງເປັນທາງການໃນວັນທີ່ 15 ສິງຫາ 1991; ລັດຖະທຳມະນູນແຫ່ງ ສປປ ລາວ ໄດ້ມີການປັບປຸງມາແລ້ວ 2 ຄັ້ງຄື: ຄັ້ງທີ 1 ປີ 2003 ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ V ໄດ້ຮັບຮອງເອົາການປັບປຸງລັດຖະທຳມະນູນ ປະກອບມີ 11 ໝວດ 98 ມາດຕາ; ຄັ້ງທີ 2: ປີ 2015 ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຮັບຮອງເອົາການປັບປຸງ ລັດຖະທຳມະນູນສະບັບດັ່ງກ່າວ ປະກອບມີ 14 ໝວດ, 119 ມາດຕາ ເຊິ່ງໄດ້ເຮັດໃຫ້ ລັດຖະທຳມະນູນ ມີເນື້ອໃນຄົບຖ້ວນ ແລະ ສົມບູນກວ່າເກົ່າ.

ລັດຖະທຳມະນູນແຫ່ງ ສປປລາວ ມີຄວາມສຳຄັນເປັນຢ່າງຍິ່ງ ຕໍ່ຊີວິດການເມືອງຂອງປວງຊົນລາວທັງຊາດ, ເພາະໃນດ້ານທາດແທ້ກໍ່ແມ່ນການສ້າງສະຕິຊາດ ຄວາມເປັນເອກະພາບເປັນອັນໜຶ່ງອັນດຽວກັນ ພາຍໃຕ້ການນຳພາຂອງພັກ, ຮັບຮູ້ ແລະ ເດັດດ່ຽວການປົກປ້ອງການດຳລົງຄົງຕົວ ທີ່ບໍ່ຕັດແຍກອອກຈາກກັນໄດ້ຂອງປະຊາຊົນ ບັນດາເຜົ່າ, ເປັນພາຫະນະທີ່ສຳຄັນເພື່ອສຶກສາອົບຮົມປະຊາຊົນ ໃນການຍົກສູງນໍ້າໃຈຮັກຊາດ, ຮັກລະບອບປະຊາທິປະໄຕ ປະຊາຊົນລາວ, ເພີ່ມຄວາມສາມັກຄີປອງດອງ ທົ່ວປວງຊົນທັງຊາດ, ເຊີດຊູບົດບາດ ແລະ ຄວາມສາມາດເປັນເຈົ້າປະເທດຊາດ ຂອງປະຊາຊົນບັນດາເຜົ່າ ແລະ ໄດ້ກຳນົດແຈ້ງ ລະບອບການເມືອງ, ລະບອບເສດຖະກິດ-ສັງຄົມ, ກົງຈັກການຈັດຕັ້ງລັດ ປະຊາທິປະໄຕ ປະຊາຊົນ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສິດ ແລະ ພັນທະຂອງພົນລະເມືອງ, ພາສາ, ຕົວອັກສອນ, ເຄື່ອງໝາຍຊາດ, ເພງຊາດ, ວັນຊາດ, ສະກຸນເງິນ ແລະ ນະຄອນຫລວງ; ລັດນຳໃຊ້ລັດຖະທຳມະນູນ ແລະ ກົດໝາຍ ເພື່ອຄຸ້ມຄອງຂົງເຂດຕ່າງໆ ຂອງຊີວິດສັງຄົມ ແນໃສ່ເຮັດໃຫ້ປະເທດຊາດ ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ ແລະ ສ້າງສິ່ງອຳນວຍຊຸກຍູ້ໃຫ້ເສດຖະກິດຂະຫຍາຍຕົວ ໄປຕາມເສັ້ນທາງສັງຄົມນິຍົມ ທີ່ພັກເຮົາໄດ້ກຳນົດໄວ້.

ແລະ ຍັງໄດ້ຮັບຟັງມູນເຊື້ອ 40 ປີຂອງສານປະຊາຊົນແຫ່ງ ສປປລາວ ເຊິ່ງພາຍຫລັງສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຂຶ້ນ, ພັກ ແລະ ລັດໄດ້ນຳພາປະຊາຊົນລາວທັງຊາດ ປະຕິບັດສອງໜ້າທີ່ຍຸດທະສາດ ຕິດພັນກັບການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍເທື່ອລະກ້າວ ໃນເບື້ອງຕົ້ນແມ່ນກະຊວງຍຸຕິທຳເຮັດໜ້າທີ່ຕົ້ນຕໍໃນການຈັດຕັ້ງປະຕິບັດກົດໝາຍເພື່ອປົກປັກຮັກສາຜົນປະໂຫຍດອັນຊອບທຳຂອງລັດ, ຂອງປະຊາຊົນ, ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມຍຸຕິທຳໃນສັງຄົມ ໂດຍຖືເອົາຄຳສັ່ງເລກທີ 53/ນຍ, ລົງວັນທີ 15 ຕຸລາ 1976 ຂອງສຳນັກງານນາຍົກລັດຖະມົນຕີ ກ່ຽວກັບການຈັບຕົວ, ການສືບສວນ-ສອບສວນ ແລະ ການຕັດສິນຜູ້ກະທຳຜິດເປັນບ່ອນອີງ, ໃນວັນທີ 4 ສິງຫາ 1976 ກອງປະຊຸມກົມການເມືອງສູນກາງພັກ ໄດ້ພິຈາລະນາແຕ່ງຕັ້ງຄະນະຄົ້ນຄວ້າວິຊາສະເພາະຂອງກະຊວງຍຸຕິທຳຂຶ້ນ ເພື່ອນຄົ້ນຄວ້າແຜນນະໂຍບາຍຢ່າງຮອບດ້ານຂອງກະຊວງຍຸຕິທຳ ຈາກການເຄື່ອນໄຫວວຽກງານດັ່ງກ່າວຈຶ່ງພາໃຫ້ມີການກຳເນີດສານປະຊາຊົນ ແລະ ເຕີບໃຫຍ່ຂະຫຍາຍຕົວຕາມແຕ່ລະໄລຍະຄື ໄລຍະແຫ່ງການກຳເນີດສານປະຊາຊົນ (1975-1982), ໄລຍະແຫ່ງການສ້າງຕັ້ງສານປະຊາຊົນ (1982-1989), ໄລຍະແຫ່ງການກໍ່ສ້າງ ແລະ ພັດທະນາລະບົບສານປະຊາຊົນ (1989-2003), ໄລຍະແຫ່ງການປັບປຸງ ແລະ ພັດທະນາລະບົບສານປະຊາຊົນ (2003-2009), ໄລຍະແຫ່ງການພັດທະນາລະບົບສານປະຊາຊົນ (2009 ເຖິງປັດຈຸບັນ)

ໃນຕອນທ້າຍພິທີ, ຍັງມີການມອບໃບຍ້ອງຍໍຂອງເຈົ້າແຂວງຫລວງນໍ້າທາ ໃຫ້ບຸກຄົນດີເດັ່ນ ປະຈຳປີ 2021 ແລະ ບຸກຄົນທີ່ມີຜົນງານດີເດັ່ນໃນການປະກອບສ່ວນເຫື່ອແຮງ, ສະຕິປັນຍາ ເພື່ອພັດທະນາແຂວງຫລວງນໍ້າທາ ເຊິ່ງສະພາປະຊາຊົນແຂວງມີທັງໝົດ 46 ທ່ານ ຍິງ 18 ທ່ານ ແລະ ມອບໃບຍ້ອງຍໍຈາກປະທານສານປະຊາຊົນສູງສຸດ,ໃບຍ້ອງຍໍທ່ານເຈົ້າແຂວງ ໃຫ້ແກ່ສານປະຊາຊົນແຂວງຈຳນວນ 26 ທ່ານ ຍິງ 11 ທ່ານ.

ພ້ອມດຽວກັນນັ້ນ, ບໍລິສັດ ໄຊພະຈັນ ກໍ່ສ້າງ ຍັງໄດ້ມອບເຄື່ອງສຽງຈຳນວນ 5 ເຄື່ອງ ລວມມູນຄ່າ 10.000.000 ກີບ ໃຫ້ແກ່ສະພາປະຊາຊົນແຂວງ ເພື່ອໝູນໃຊ້ເຂົ້າໃນວຽກງານສະພາປະຊາຊົນແຂວງ ໂດຍການມອບຂອງທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງຫລວງນໍ້າທາ ແລະ ຮັບຂອງທ່ານ ຄຳຜາຍ ໄຊພະຈັນ ສະມາຊິກສະພາປະຊາຊົນແຂວງ ຫົວໜ້າບໍລິສັດ ໄຊພະຈັນ ກໍ່ສ້າງ ແລະ ຍັງໄດ້ມອບຂັນລາງວັນ, ເງິນລາງວັນ ໃນການສ້າງຂະບວນການກິລາບານເຕະຊາຍ ເນື່ອງໃນ 2 ວັນສຳຄັນປະຫວັດສາດ ລວມທັງໝົດ 4 ທີມ, ລາງວັນທີ1 ໄດ້ແກ່ສານປະຊາຊົນແຂວງ, ທີ 2 ໄກ້ແກ່ສະພາປະຊາຊົນແຂວງ ແລະ ທີ 3 ຮ່ວມໄດ້ແກ່ອົງການໄອຍະການແຂວງ ແລະ ພະແນກຍຸຕິທຳແຂວງ.

(ນາງ ວັນນີ ແຝງບົວວັນ)

## ສືບຕໍ່ພົບປະຜູ້ມີສິດເລືອກຕັ້ງ ຢູ່ເມືອງອາດສະພັງທອງ



(ສພຊ) ໃນຕອນເຊົ້າຂອງວັນທີ 17 ສິງຫາ 2022 ທີ່ວັດບ້ານແຈລະມ່ອງ ເມືອງອາດສະພັງທອງ ແຂວງສະຫວັນນະເຂດ, ທ່ານ ນາງ ທົງຄຳ ໄຊຍະຄົມ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເມືອງອາດສະພັງທອງ ພ້ອມດ້ວຍການນຳຂັ້ນເມືອງ ໄດ້ພົບປະໂອ້ລົມອຳນາດການປົກຄອງບ້ານໃຫຍ່ແຈລະມ່ອງ ແລະ ກຸ່ມບ້ານຫລຽນໄຊ ພ້ອມດ້ວຍພໍ່ແມ່ປະຊາຊົນໃຫ້ກຽດຕ້ອນຮັບຄະນະຜູ້ແທນຢ່າງອົບອຸ່ນ.

ໃນພິທີ, ຄະນະຜູ້ແທນໄດ້ເຜີຍແຜ່ກ່ຽວກັບຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ໃນນັ້ນ, ໄດ້ຍົກໃຫ້ເຫັນບັນຫາທີ່ສຳຄັນກ່ຽວກັບວາລະແຫ່ງຊາດເປັນຕົ້ນກໍແມ່ນບັນຫາຢາເສບຕິດທີ່ລັດຖະບານໄດ້ພ້ອມກັນເລັ່ງແກ້ໄຂ ເປັນຫາໃຫຍ່ທີ່ເປັນການເບື່ອເມົາສັງຄົມ ເປັນຕົ້ນກໍແມ່ນລູກຫລານທີ່ເປັນຫົ່ນແໜງຂອງຊາດໃຫ້ໝົດໄປເທື່ອລະກ້າວ ໂດຍເລັ່ງໃສ່ການແກ້ໄຂບັນຫາແຕ່ຂັ້ນຮາກຖານ, ບ້ານ ແລະ ກຸ່ມບ້ານໃນຂອບເຂດທົ່ວປະເທດເວົ້າລວມ, ເວົ້າສະເພາະກໍ່ຄືເມືອງອາດສະພັງທອງໃຫ້ຫລຸດພົ້ນອອກຈາກການຄອບງຳຂອງຢາເສບຕິດທີ່ແຜ່ລະບາດໃນສັງຄົມລາວປັດຈຸບັນໃຫ້ໄດ້ໂດຍສິ້ນເຊີງ ໂດຍອີງໃສ່ເຈົ້າໜ້າທີ່ກໍຄືອຳນາດການປົກຄອງແຕ່ລະຂັ້ນເປັນເຈົ້າການຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ນອກຈາກນັ້ນ, ຍັງໄດ້ຍົກໃຫ້ເຫັນຕື່ມກ່ຽວກັບບັນຫາການພັດທະນາເສດຖະກິດ-ສັງຄົມໃນແຕ່ລະຫົວໜ່ວຍການຜະລິດ ແລະ ບັນຫາປາກົດການຫຍໍ້ທໍ້ທາງດ້ານການເງິນເພື່ອຫລຸດຜ່ອນໄພເງິນເຟີ້ໃນສັງຄົມລາວປັດຈຸບັນ ແລະ ບັນຫາອື່ນໆອີກຈຳນວນໜຶ່ງ.

ທັງນີ້, ກໍເພື່ອເປັນການໂອ້ລົມຊີ້ນຳຕໍ່ບັນດາຄະນະອຳນາດການປົກຄອງບ້ານ ແລະ ຮັບຟັງຄຳຄິດຄຳເຫັນຈາກພໍ່ແມ່ປະຊາຊົນ ຕະຫລອດຮອດອຳນາດການປົກຄອງທ້ອງຖິ່ນໃນການຈັດຕັ້ງວາລະແຫ່ງຊາດທີ່ຕິດພັນກັບການພັດທະນາເສດຖະກິດ-ສັງຄົມໃນແຕ່ລະທ້ອງຖິ່ນ ໃຫ້ສອດຄ່ອງຕໍ່ກັບແນວທາງນະໂຍບາຍໃໝ່ຂອງພັກວາງອອກໃນແຕ່ລະໄລຍະໃຫ້ປາກົດຜົນເປັນຈິງ.

# ປະທານ ສສຊ ເຂດ 10 ຍົກໃຫ້ເຫັນຜົນງານຫລາຍດ້ານໃນໄລຍະຜ່ານມາ

ທ່ານ ບຸນສອນ ເຜັດລາວັນ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ IX ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ໃນວາລະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ໄດ້ໃຫ້ສຳພາດຕໍ່ສື່ມວນຊົນ ໃຫ້ຮູ້ວ່າ: ນັບແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ IX ຮອດປັດຈຸບັນ ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ກໍຄືສະພາປະຊາຊົນແຂວງ (ສພຂ) ວຽງຈັນ ຊຸດທີ II ຍາດໄດ້ຜົນງານໃນຫລາຍດ້ານ ດັ່ງນີ້:

**1. ດ້ານນິຕິບັນຍັດ:** ເປັນເຈົ້າການເຂົ້າຮ່ວມປະກອບຄຳຄິດຄຳເຫັນພິຈາລະນາ ແລະ ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ຂອງ ສພຊ ຊຸດທີ IX ວ່າດ້ວຍແຜນການສ້າງ ແລະ ປັບປຸງກົດໝາຍ ແລະ ສພຂ ສ້າງນິຕິກຳໃຕ້ກົດໝາຍ ຈຳນວນ 11 ສະບັບ ໃນໄລຍະ 5 ປີ ໄດ້ປະກອບສ່ວນພິຈາລະນາຮັບຮອງເອົາກົດໝາຍສ້າງໃໝ່ ແລະ ປັບປຸງຂອງ ສພຊ ຊຸດທີ IX ຈຳນວນ 16 ສະບັບ.

**2. ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງຊາດ, ຂອງແຂວງ:** ໄດ້ສົມທົບກັບ ສພຂ ຄົ້ນຄວ້າພິຈາລະນາບັນຫາສຳຄັນຕ່າງໆຂອງຊາດ, ຂອງແຂວງ ເຊັ່ນ ພິຈາລະນາຮັບຮອງການເຄື່ອນໄຫວວຽກງານຂອງ ສພຊ ຊຸດທີ IX ໂດຍສະເພາະການຈັດຕັ້ງປະຕິບັດແຜນພັດທະເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງຊາດຂອງລັດຖະບານ, ວຽກງານອົງການຕຸລາການ 5 ປີ (2016-2020) ແລະ ທິດທາງແຜນການ 5 ປີ ຄັ້ງທີ IX (2021-2025), ໄດ້ຄົ້ນຄວ້າພິຈາລະນາ ແລະ ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ 5 ປີ (2021-2025), ສານປະຊາຊົນ ແລະ ອົງການກວດກາລັດ 5 ປີ (2021-2025) ຜົນການຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ຮັບຮອງເອົາຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງວຽງຈັນ.

3. ດ້ານການຕິດຕາມກວດກາ: ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ໄດ້ຊຸກຍູ້ໃຫ້ ສພຂ ສືບຕໍ່ເຄື່ອນໄຫວຕິດຕາມກວດກາ, ຊຸກຍູ້ພາກສ່ວນກ່ຽວຂ້ອງຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມຄັ້ງປະຖົມມະລຶກ ແລະ ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ເປັນຕົ້ນແມ່ນບັນດາຄາດໝາຍ, ມາດຕະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານວຽກງານອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ 5 ປີ (2021-2025) ແລະ ຊຸກຍູ້ຕິດຕາມການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ, ການກະກຽມການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ທີ່ຕິດພັນກັບວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ເຂົ້າຮ່ວມກອງປະຊຸມການປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການກັ້ນ ແລະ ຄວບຄຸມພະຍາດຕິດຕໍ່ສຳລັບບັນດາແຂວງພາກກາງ ແລະ ເປັນເຈົ້າການ ລົງຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດບັນດາຄາດໝາຍ ໃນຂົງເຂດວຽກງານສຶກສາທິການ ແລະ ກິລາ, ການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຊັ້ນທຸກສາຍໃນໄລຍະໃໝ່ ແລະ ການຈັດຕັ້ງປະຕິບັດວຽກງານກິລາ-ກາຍຍະກຳ, ລົງຕິດຕາມກວດກາການປະຕິບັດນິຕິກຳທີ່ພົວພັນກັບວຽກງານເຊົ່າ, ສຳປະທານທີ່ດິນ ແລະ ລົງຕິດຕາມການຊົດເຊີຍຜົນກະທົບຈາກໂຄງການທາງລົດໄຟລາວ-ຈີນ.



ປະທານຄະນະ ສສຊ ຍັງໃຫ້ຮູ້ຕື່ມວ່າ: ວຽກງານຮັບ ແລະ ພິຈາລະນາຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳ ຂອງປະຊາຊົນ ໄດ້ຮັບຄຳຮ້ອງ-ຄຳສະເໜີຂໍຄວາມເປັນທຳຂອງປະຊາຊົນ ທັງໝົດຈຳນວນ 87 ເລື່ອງ, ເປັນຄຳສະເໜີ 41 ເລື່ອງ ພິຈາລະນາແລ້ວ 37 ເລື່ອງ; ເປັນຄຳຮ້ອງຂໍຄວາມເປັນທຳ ຈຳນວນ 45 ເລື່ອງ ພິຈາລະນາແລ້ວ 36 ເລື່ອງ. ລວມແລ້ວໄດ້ຄົ້ນຄວ້າພິຈາລະນາຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳໂດຍສົ່ງໃຫ້ພາກສ່ວນກ່ຽວຂ້ອງເປັນຜູ້ພິຈາລະນາແກ້ໄຂແລ້ວຈຳນວນ 73 ເລື່ອງ, ໃນນັ້ນ ໄດ້ລາຍງານຫາ ສພຊ ຈຳນວນ 9 ເລື່ອງ, ປັດຈຸບັນກຳລັງຄົ້ນຄ້ວາຈຳນວນ 14 ເລື່ອງ; ພ້ອມນັ້ນ, ຍັງໄດ້ໃຫ້ຄຳປຶກສາທາງດ້ານກົດໝາຍໃຫ້ແກ່ປະຊາຊົນບັນດາເຜົ່າໄດ້ຈຳນວນ 244 ເທື່ອຄົນ.

ສຳລັບການລົງພົບປະ ແລະ ລະດົມວັດຖຸປັດໄຈຊ່ວຍເຫລືອໃຫ້ແກ່ປະຊາຊົນ, ຄະນະ ສສຊ ປະຈຳເຂດເລືອກຕັ້ງ ກໍຄື ສສຂ ວຽງຈັນ ໄດ້ລົງພົບປະຢ້ຽມຢາມປະຊາຊົນບັນດາເຜົ່າ ຕິດພັນກັບການນຳເອົາຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ແລະ ສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ລົງເຜີຍແຜ່ໄດ້ທັງໝົດຈຳນວນ 185 ຈຸດ, ມີຜູ້ເຂົ້າຮ່ວມຮັບຟັງ 11.130 ທ່ານ ຍິງ 4.468 ທ່ານ; ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ປະຈຳຢູ່ສູນກາງສົມທົບກັບຄະນະ ສສຊ ປະຈຳຢູ່ທ້ອງຖິ່ນ ໄດ້ມອບເຄື່ອງຊ່ວຍເຫລືອໃຫ້ແກ່ໂຮງໝໍເມືອງທຸລະຄົມ 1 ຄັ້ງ ລວມເປັນມູນຄ່າ 20 ລ້ານກວ່າກີບ; ປະທານ ສພຂ ວຽງຈັນ ພ້ອມດ້ວຍຄະນະມອບລົດຮັບ-ສົ່ງຄົນເຈັບໃຫ້ແກ່ໂຮງໝໍນ້ອຍບ້ານຜາສັງ ເມືອງເຟືອງລວມມູນຄ່າ 20.000 ໂດລາ, ໂທລະໂຄ່ງຈຳນວນ 2 ຊຸດໃຫ້ແກ່ບ້ານຂອນແກ່ນ ແລະ ບ້ານຜາສັງລວມມູນຄ່າ 30 ລ້ານກີບ, ເຈວລ້າງມື 20 ແກັດ.

ທ່ານ ບຸນສອນ ເຜັດລາວັນ ຍັງໃຫ້ຮູ້ຕື່ມວ່າ: ນັບແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ IX ຮອດປັດຈຸບັນ ສພຂ ມີຜົນສຳເລັດໃນການເຜີຍແຜ່ ແລະ ຈັດຕັ້ງລັດຖະທຳມະນູນກົດໝາຍ, ມະຕິກອງປະຊຸມ ສພຊ, ສພຂ ແລະ ບັນດານິຕິກຳໃຕ້ກົດໝາຍຄື: ເປັນເຈົ້າການເຂົ້າຮ່ວມປະກອບຄຳຄິດຄຳເຫັນພິຈາລະນາ ແລະ ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ຂອງ ສພຊ ຊຸດທີ IX ວ່າດ້ວຍແຜນການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 96 ສະບັບ, ໃນນັ້ນ ກົດໝາຍສ້າງໃໝ່ 38 ສະບັບ, ປັບປຸງ 58 ສະບັບ ແລະ ສພຂ ໄດ້ຊຸກຍູ້ໃຫ້ອົງການປົກຄອງແຂວງສ້າງນິຕິກຳໃຕ້ກົດໝາຍ ນອນ 11 ສະບັບ ໃນໄລຍະ 5 ປີ. ນອກຈາກນັ້ນ, ຍັງໄດ້ຮັບຮອງເອົາບັນດາມະຕິກອງປະຊຸມຄັ້ງປະຖົມມະລຶກ ແລະ ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຊຸດທີ II ຄື: ມະຕິກອງປະຊຸມຄັ້ງປະຖົມມະລຶກຂອງ ສພຂ ວຽງຈັນ ຊຸດທີ II ສະບັບເລກທີ 09/ສພຂ.ວຈ, ລົງວັນທີ 22 ເມສາ 2021 ວ່າດ້ວຍການແຕ່ງຕັ້ງປະທານ ສພຂ ວຽງຈັນ ຊຸດທີ II; ມະຕິກອງປະຊຸມຄັ້ງປະຖົມມະລຶກຂອງ ສພຂ ວຽງຈັນ ຊຸດທີ II ສະບັບເລກທີ 10/ສພຂ.ວຈ, ລົງວັນທີ 22 ເມສາ 2021ວ່າດ້ວຍການແຕ່ງຕັ້ງຮອງປະທານ ສພຂ ວຽງຈັນ ຊຸດທີ II; ມະຕິກອງປະຊຸມຄັ້ງປະຖົມມະລຶກຂອງ ສພຂ ວຽງຈັນ ຊຸດທີ II ສະບັບເລກທີ 11/ສພຂ.ວຈ, ລົງວັນທີ 22 ເມສາ 2021ວ່າດ້ວຍການເລືອກຕັ້ງກຳມະການຄະນະປະຈຳ ສພຂ ວຽງຈັນ ຊຸດທີ II; ມະຕິຂອງຄະນະປະຈຳ ສພຂ ສະບັບເລກທີ 12/ສພຂ.ວຈ, ລົງວັນທີ 22 ເມສາ 2021 ວ່າດ້ວຍການຮັບຮອງເອົາກົງຈັກຂອງ ສພຂ ແລະ ຮັບຮອງເອົາການແຕ່ງຕັ້ງປະທານກຳມະການ, ເລຂາທິການ ແລະ ຮອງປະທານກຳມະການຂອງ ສພຂ ຊຸດທີ II; ມະຕິຂອງຄະນະປະຈຳ ສພຂ ວ່າດ້ວຍການຮັບຮອງເອົາການແຕ່ງຕັ້ງຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງວຽງຈັນ ສະບັບເລກທີ 13/ສພຂ.ວຈ, ລົງວັນທີ 22 ເມສາ 2021; ມະຕິຂອງຄະນະປະຈຳ ສພຂ (2021-2025) ສະບັບເລກທີ 17/ສພຂ.ວຈ, ລົງວັນທີ 5 ພຶດສະພາ 2021 ວ່າດ້ວຍການຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ 5 ປີ ຂອງ ສພຂ ຊຸດທີ II; ມະຕິຂອງຄະນະປະຈຳ ສພຂ ສະບັບເລກທີ 18/ສພຂ.ວຈ, ລົງວັນທີ 5 ພຶດສະພາ 2021 ວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ 5 ປີ (2016-2020) ແລະ ທິດທາງແຜນການວຽກງານ 5 ປີ (2021-2025) ຂອງສານປະຊາຊົນແຂວງວຽງຈັນ; ມະຕິຂອງຄະນະປະຈຳ ສພຂ ສະບັບເລກທີ 19/ສພຂ.ວຈ, ລົງວັນທີ 5 ພຶດສະພາ 2021ວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ 5 ປີ (2016-2020) ແລະ ທິດທາງແຜນການວຽກງານ 5 ປີ (2021-2025) ຂອງໄອຍະການປະຊາຊົນແຂວງວຽງຈັນ; ມະຕິຂອງຄະນະປະຈຳ ສພຂ ສະບັບເລກທີ 21/ສພຂ.ວຈ, ລົງວັນທີ 14 ພຶດສະພາ 2021 ວ່າດ້ວຍການຮັບຮອງເອົາການບັນຈຸຊັບຊ້ອນ ສສຂ ເຂົ້າໃສ່ແຕ່ລະຄະນະກຳມະການຂອງ ສພຂ ຊຸດທີ II; ມະຕິຂອງຄະນະປະຈຳ ສພຂ ສະບັບເລກທີ 22/ສພຂ.ວຈ, ລົງວັນທີ 14 ພຶດສະພາ 2021 ວ່າດ້ວຍການຮັບຮອງເອົາການຈັດແບ່ງ ສສຊ ຢູ່ທ້ອງຖິ່ນຄວບ ສສຂ ວຽງຈັນ ປະຈຳເຂດເລືອກຕັ້ງເມືອງ; ມະຕິຂອງຄະນະປະຈຳ ສພຂ ສະບັບເລກທີ 35/ສພຂ.ວຈ, ລົງວັນທີ 22 ພຶດສະພາ 2021 ວ່າດ້ວຍການຮັບຮອງເອົາການຈັດຕັ້ງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ V (2016-2020) ແລະ ທິດທາງແຜນການ 5 ປີ ຄັ້ງທີ VI (2021-2025); ມະຕິຂອງຄະນະປະຈຳ ສພຂ ສະບັບເລກທີ 35/ສພຂ.ວຈ, ລົງວັນທີ 22 ພຶດສະພາ 2021 ວ່າດ້ວຍການຮັບຮອງເອົາການຈັດຕັ້ງແຜນງົບປະມານຂອງແຂວງ 5 ປີ ຄັ້ງທີ V (2016-2020) ແລະ ທິດທາງແຜນການ 5 ປີ ຄັ້ງທີ VI (2021-2025); ມະຕິຂອງຄະນະປະຈຳ ສພຂ ວຽງຈັນ ສະບັບເລກທີ 35/ສພຂ.ວຈ, ລົງວັນທີ 22 ພຶດສະພາ 2021 ວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ 5 ປີ (2016-2020) ແລະ ທິດທາງແຜນການ 5 ປີ (2021-2025) ຂອງອົງການກວດກາລັດແຂວງວຽງຈັນ; ມະຕິຂອງຄະນະປະຈຳ ສພຂ ວຽງຈັນ ສະບັບເລກທີ 53/ຄປຈ.ສພຂ.ວຈ, ລົງວັນທີ 25 ພະຈິກ 2021 ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຕິດຕາມກວດກາ ແລະ ຊຸກຍູ້ການສ້າງນິຕິກຳໃຕ້ກົດໝາຍຂອງອົງການປົກຄອງແຂວງຈຳນວນ 11 ສະບັບ; ມະຕິຂອງຄະນະປະຈຳ ສພຂ ວຽງຈັນ ສະບັບເລກທີ 06/ສພຂ.ວຈ, ລົງວັນທີ 21 ມັງກອນ 2022ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບການຈັດຕັ້ງປະຕິແຜນພັດທະນາເສດ-ສັງຄົມປະຈຳປີ 2021 ແລະ ທິດທາງແຜນການປີ 2022; ມະຕິຂອງຄະນະປະຈຳ ສພຂ ວຽງຈັນ ສະບັບເລກທີ 05/ສພຂ.ວຈ, ລົງວັນທີ 21 ມັງກອນ 2022 ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບບົດສະຫລຸບຂາດຕົວການຈັດຕັ້ງປະຕິແຜນງົບປະມານປະຈຳປີ 2021 ແລະ ທິດທາງແຜນການປີ 2022.

# ການແຂ່ງຂັນກິລາບານເຕະຟຸດຊໍ ຊິງຂັນປະທານ ສພຂ ຈຳປາສັກ

(ສພຊ) ໃນຕອນບ່າຍຂອງວັນທີ 15 ສິງຫາ 2022 ການແຂ່ງຂັນກິລາບານເຕະຟຸດຊໍ ຊິງຂັນປະທານສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ເນື່ອງໃນໂອກາດສະເຫລີມສະຫລອງວັນສ້າງຕັ້ງລັດຖະທຳມະນູນ ແຫ່ງ ສປປລາວ ຄົບຮອບ 31 ປີ (15 ສິງຫາ 1991-15 ສິງຫາ 2022) ຈັດຂຶ້ນທີ່ສະໜາມກິລາບານເຕະຟຸດຊໍ ນາດາວ ໄດ້ປິດລົງດ້ວຍຜົນສຳເລັດຢ່າງຈົບງາມ ໂດຍໃນນັດຊິງຊະນະເລີດ ແລະ ພິທີປິດ ໄດ້ຮັບກຽດເຂົ້າຮ່ວມເປັນປະທານຂອງທ່ານ ສາຍທອງ ໄຊຍະວົງ ຮອງເລຂາພັກແຂວງ, ປະທານ ສພຂ ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ, ມີບັນດາທ່ານຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ແລະ ບັນດາທ່ານການນຳຈາກ 8 ພາກສ່ວນ ຕາງໜ້າໃນທຸກຂົງເຂດວຽກງານເຂົ້າຮ່ວມຄື: ສພຂ, ຫ້ອງວ່າການແຂວງ, ກອງບັນຊາການທະຫານແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ອົງການໄອຍະການແຂວງ, ສານປະຊາຊົນແຂວງ, ພະແນກຍຸຕິທຳ ແລະ ທະນາຄານພັດທະນາລາວ ສາຂາແຂວງຈຳປາສັກ ທີມຄະນະນັກກິລາບານເຕະ ແລະ ກອງເຊຍຈາກທຸກພາກສ່ວນ ເຂົ້າຮ່ວມ.



ການແຂ່ງຂັນກິລາບານເຕະຟຸດຊໍ ຊິງຂັນປະທານ ສພຂ ຈຳປາສັກ ຄັ້ງນີ້, ໄດ້ເລີ່ມການແຂ່ງຂັນມາແຕ່ວັນທີ 13 ສິງຫາ 2022 ໂດຍປະກອບມີ 8 ທີມ ເຂົ້າຮ່ວມການແຂ່ງຂັນຄື: ສພຂ, ຫ້ອງວ່າການແຂວງ, ກອງບັນຊາການທະຫານແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ພະແນກຍຸຕິທຳ ແລະ ທະນາຄານພັດທະນາ.

ຜົນການແຂ່ງຂັນສາມາດຄັດໄດ້ທີມຊະນະເລີດແຕ່ລະລຳດັບ ແລະ ມີພິທີມອບ-ຮັບ ຂອງລາງວັນກອງຈາກ ທ່ານ ສາຍທອງ ໄຊຍະວົງ ຮອງເລຂາພັກແຂວງ, ປະທານ ສພຂ ແລະ ບັນດາທານໃນຄະນະປະທານ ດັ່ງນີ້: ທີມກອງບັນຊາດການທະຫາແຂວງຈຳປາສັກ ເປັນທີມຊະນະເລີດ ໄດ້ຮັບຂັນລາງວັນ ພ້ອມເງິນສົດ 1,5 ລ້ານກີບ; ທີມກອງບັນຊາການປ້ອງກັນຄວາມສະຫງົບແຂວງຈຳປາສັກ ເປັນທີມຊະນະເລີດໄດ້ຮັບເງິນສົດ 1 ລ້ານກີບ, ທີມພະແນກຍຸຕິທຳ ເປັນທີມຊະນະເລີດອັນດັບ 3 ໄດ້ຮັບເງິນສົດ 7 ແສນກີບ.

ການແຂ່ງຂັນກິລາບານເຕະຟຸດຊໍ ຊິງຂັນປະທານ ສພຂ ຈຳປາສັກ ເນື່ອງໃນໂອກາດສະເຫລີມສະຫລອງວັນສ້າງຕັ້ງລັດຖະທຳມະນູນ ແຫ່ງ ສປປລາວ ຄົບຮອບ 31 ປີ ຄັ້ງນີ້, ພະນັກງານ-ລັດຖະກອນ, ທະນະຫານ, ຕຳຫລວດ ແລະ ພະນັກງານພາກທຸລະກິດ ທີ່ເປັນນັກກິລາເຂົ້າຮ່ວມການແຂ່ງຂັນໄດ້ພ້ອມກັນໃຊ້ທັກສະຄວາມສາມາດ, ມີການປະສານງານເຂົ້າໃນເກມການແຂ່ງຂັນ ແລະ ມີນ້ຳໃຈນັກກິລາ ເຮັດໃຫ້ບັນຍາກາດຂອງການແຂ່ງຂັນເຕັມເປັນດ້ວຍຄວາມສາມັກຄີຮັກແພງ, ການແຂ່ງຂັນໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.



## ສຸຂະສະບາຍຫາຍໂຣຄາ

# ການຮັບປະທານໝາກໄມ້ໃຫ້ໄດ້ປະໂຫຍດຫລາຍ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ



ໝາກໄມ້ ເປັນແຫລ່ງລວມວິຕາມິນ ແລະ ແຮ່ທາດທີ່ອຸດົມສົມບູນ ແຕ່ການບໍລິໂພກໝາກໄມ້ສົດບາງຊະນິດຕ້ອງເໝາະສົມ ເພື່ອໃຫ້ໄດ້ຄຸນປະໂຫຍດຫລາຍທີ່ສຸດ ຊ່ວຍໃຫ້ອະໄວຍະວະຕ່າງໆໃນຮ່າງກາຍເຮັດວຽກໄດ້ຢ່າງມີປະສິດທິພາບ ຫລຸດຄວາມສ່ຽງຂອງພະຍາດຊຳເຮື້ອ ລວມທັງຊ່ວຍຫລຸດນ້ຳໜັກ ແຕ່ການກິນໝາກໄມ້ ເພື່ອໃຫ້ໄດ້ຜົນປະໂຫຍດສູງສຸດກໍຕ້ອງມີເວລາທີ່ເໝາະສົມ ເຊິ່ງຫວ່າງບໍ່ດົນມານີ້ ເວັບໄຊທາມອັອບອິນເດຍ (Times of India) ມີຄຳແນະນຳບາງ ຢ່າງ ສຳລັບການກິນໝາກໄມ້ ເພື່ອໃຫ້ໄດ້ປະໂຫຍດສູງສຸດ ແລະ ໃນມື້ນີ້, ເຮົາໄດ້ນຳເອົາບົດຄວາມດັ່ງກ່າວ ມານຳສະເໜີໃຫ້ທ່ານຜູ້ອ່ານໄດ້ຮັບຮູ້ໄປພ້ອມໆກັນ.

ຫລາຍທ່ານອາດຈະສົງໄສວ່າເປັນຫຍັງ ຈຶ່ງບໍ່ຄວນກິນໝາກໄມ້ຫລັງຕາເວັນຕົກດິນ ອີງຕາມຕຳລາຢາຂອງອິນເດຍບູຮານໃຫ້ຮູ້ວ່າ ການກິນໝາກໄມ້ໃນຕອນແລງ ອາດຈະລົບກວນການນອນ ແລະ ອາດຈະໄປຂັດຂວາງຂະບວນການຍ່ອຍອາຫານ ເພາະວ່າໝາກໄມ້ສ່ວນໃຫຍ່ ເປັນຄາໂບໄຮເດຣດທຳມະດາ (Simple Carbs) ຫລື ຄາໂບໄຮເດຣດທີ່ຍ່ອຍໄດ້ງ່າຍ ເຊິ່ງໝາຍຄວາມວ່າ ສາມາດຍ່ອຍໄດ້ ເຖິງແມ່ນວ່າພວກມັນເປັນແຫລ່ງພະລັງງານທີ່ດີທີ່ສຸດ ແຕ່ໃນເວລາດຽວກັນ ມັນກໍເພີ່ມລະດັບນ້ຳຕານໃນເລືອດ ສະນັ້ນ, ການກິນໝາກໄມ້ໃກ້ເວລານອນ ອາດຈະລົບກວນການນອນ. ເນື່ອງຈາກລະດັບນ້ຳຕານໃນເລືອດເພີ່ມສູງຂຶ້ນ ເຮັດໃຫ້ການເຜົາຜານອາຫານຂອງຊ້າລົງ ນອກຈາກນີ້, ຫລັງຈາກຕາເວັນຕົກດິນ ລະບົບເຜົາຜານໃນຮ່າງກາຍຈະເຮັດວຽກຊ້າລົງ ພ້ອມທັງຄາໂບໄຮເດຣເຫລົ່ານັ້ນຈະຍ່ອຍຍາກ ຈຶ່ງຄວນຈຳກັດປະລິມານຂອງການໄດ້ຮັບຄາໂບໄຮເດດໃຫ້ໜ້ອຍລົງກ່ອນຕາເວັນຕົກດິນ ຈະເປັນການດີທີ່ສຸດ.

ສ່ວນຊ່ວງເວລາທີ່ດີທີ່ສຸດ ທີ່ຈະກິນໝາກໄມ້ ແມ່ນຕອນເຊົ້າຍາມທ້ອງວ່າງ ເພາະວ່າເມື່ອພວກເຮົາຕື່ນນອນ ຫລັງຈາກອົດອາຫານເກືອບ 10 ຊົ່ວໂມງໃນຕອນກາງຄືນ ກະເພາະອາຫານຈະວ່າງ ການກິນອາຫານເພື່ອສຸຂະພາບໃນຕອນເຊົ້າ ຈະຊ່ວຍເຮັດໃຫ້ຮ່າງກາຍດູດຊຶມສານອາຫານ ແລະ ຈະຊ່ວຍກະຕຸ້ນການເຜົາຜານໄດ້ດີ.

www.thairath.co.th

## ສາລາກະວີ

# ເຊີນທ່ຽວຫລວງພະບາງ

# ໂດຍ: ສາວຄູ ວັງຄົກລິ່ນ

※ ຫລວງພະບາງຊື່ນີ້
ຄົນກ່າວຂານດັງໄກ
ຫລວງພະບາງລືໄກກ້ອງ
ຮີດ 12 ຄອງ 14 ມີເສື່ອມເສົ້າ
ລືຊ່າມານານ
ຊື່ນຊົມນິຍົມຍ້ອງ
ປະເພນີເດີມເກົ່າ
ປະຊາເຊື້ອຮັກສາ ນັ້ນນາ!

※ ວັດທະນະທຳເອກອ້າງ
ປວງປະຊາຫວງແຫນ
ສາມັກຄີເສີມສ້າງ
ບໍ່ໃຫ້ດູຕ່ຳຕ້ອຍ
ເຮືອງຮຸ່ງຕະການຕາ
ຮີດຄອງຄາວກໍ້
ງານບຸນປາງປູ່
ສູນສິ້ນຫ່າງຫາຍ ແທ້ໃດ!

※ ຫລວງພະບາງ ອະນຸລັກໄວ້
ຊ່ວງເຮືອປະເພນີ
ບາງຄົນຊຸມແຊວເອີ້ນ
ບາງຜ່ອງລົງລ່ອງນ້ຳ
ບຸນໃຫຍ່ປະຈຳປີ
ມ່ວນຫລາຍເຫລືອລົ້ນ
ວາຈາຂານສິ່ງ
ຫົວຍິ້ມໃສ່ກັນ ມ່ວນເດ!

※ ບຸນຊ່ວງເຮືອແມ່ນມື້
ວັນທໍ່ເຂົ້າປະດັບດິນ
ແດນດ່ານຫລວງພະບາງກ້ຳ
ເຊີນທ່ານມາຮ່ວມເຕົ້າ
ແຮມ 14 ເດືອນກັນຍາ
ທົ່ວທານີແຄວ້ນ
ໂຮມເຮືອລົງທ່າ
ສອງເບື້ອງຍິ່ງຄານ ພີ້ນາ!

※ ເຊີນເນີ ຜົງພີ່ນ້ອງ
ຊົມແຂ່ງຂັນເຮືອຍາວ
ນັກສີພາຍຫັນຫ້າວ
ມີຄວາມຫວັງຍາດໄດ້
ໃນທົ່ວແດນລາວ
ຢູ່ຫລວງພະບາງເບື້ອງ
ສຸມກຳລັງເຕັມທີ່
ຂັນໄຊໄວ້ຢູ່ມື ແທ້ນາ!

※ ມາເຍີ ມາໂຮ່ຮ້ອງ
ມາໝາຍຕາເອົາສາວ
ໂລະລາດມວນຊົນພ້ອມ
ມາກ້ຽວສາວຕ່າງບ້ານ
ເຊຍຊ່ວງເຮືອຍາວ
ເຂດດິນແດນນີ້
ກໍມີເດີເຊີນທ່ຽວ
ເປັນໃພ້ແມ່ຊາຍ ແດ່ນາ!



## ທັກທາຍ ລະບາຍ

# ສາວຈົ້ມ

### (ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

※ ນະຄອນຫລວງວຽງຈັນ **ກຽມສ້ອມແປງລະບົບໄຟເຍືອງທາງ 21 ເສັ້ນ** ໃນຂອບເຂດນະຄອນຫລວງ ໂດຍໂຄງການເບື້ອງຕົ້ນ ແມ່ນໃຫ້ສຸ່ງແຈ້ງໝົດທຸກດອກ ແລະເຮັດສຳເລັດ**ພາຍໃນ 45 ວັນ** ຫລັງຈາກມື້ເຊັນສັນຍາ ຄືວັນທີ **18 ສິງຫາ**ຜ່ານມາ ໃນຂ່າວຍັງບອກອີກວ່າ ຈະມີການປ່ຽນຖ່າຍອຸປະກອນ ດອກໄຟທີ່ຂາດ ແລະ ຕາຍໄປ ພ້ອມທັງປ່ຽນແທນເສົາໄຟເກົ່າທີ່ເປ່ເພຍ້ອນຖືກລົດຕຳ **ດີໃຈນຳພີ່ນ້ອງ** ໃນເຂດ**ນະຄອນຫລວງ**ເຮົາເນີ! ການເດີນທາງໄປ-ມາ ຊິສຸ່ງເຮືອງເຫັນແຈ້ງ ບໍ່ໄດ້ແຍງເສົາຕັ້ງ ຢັງຢາຍໄຟບໍ່ຮຸ່ງ **ຄືເກົ່າແລ້ວ!** ຍາມເມື່ອເດີນດຸ່ງດັ້ນ ໄຟເຍືອງທາງສຸ່ງແຈ້ງ ສົມເອີ້ນວ່ານະຄອນ **ຄັກເດ!**

※ **ສະ**ແດງຄວາມເສຍໃຈນຳ **ພອນສະຫວັດ ວົງສັກດາ** ກົມຈັດຕັ້ງ-ພະນັກງານ ສະພາແຫ່ງຊາດ ທີ່**ສູນເສຍມານດາຜູ້**ໃຫ້ກຳເນີດ ໃນອາທິດຜ່ານມາ **ຄົບສະພາ**ຮ່ວມທຸ້ມ **ບິນແບ່ງໂສກາ ນຳເນີ!** ບາລະມີເຄີຍທຳ ຜ່ານມາຄາວກໍ້ ຂໍຈົ່ງມາໝູນຢູ້ ຊູວິຍານແມ່ໄປສູ່ ສອງສະຫວັນບ່ອນເບື້ອງ ຄົບເຈົ້າເລົ່າລື **ນັ້ນທ້ອນ!**

※ **ວັນ**ທີ 26 ສິງຫາທີ່ຈະມາເຖິງນີ້ ແມ່ນວັນບຸນ**ທາດເຂົ້າປະດັບດິນ** ເຊິ່ງເປັນ**ປະເພນີ**ຂອງຊາວພຸດທັງຫລາຍ ເດືອນເກົ້າດັບມໍ່ໂກ້ ສິບໃຫຍ່ກາງພັນສາ ຊາວພຸດທັງໂລກາ ຕ່າງຄອງຄອຍຖ້າ ກຽມສັບຫາອາຫານເຂົ້າ ຄາວຫວານຫລາຍເຍື່ອງ ທີ່ເຂົ້າຝັງຝາກເບື້ອງ ທໍລະນີພື້ນແຜ່ນທະລັງ ຈຸດໝາຍຫວັງຍື່ນຕ້ອນ ວິນຍານຍາດຜູ້ລາໄລ ທັງເຜດຜີທັງຫລາຍ ອຸທິດບຸນກຸສົນໃຫ້ ເຈົ້າກຳນາຍເອນພ້ອມ ເພື່ອບັນເທົາທຸເລົາທຸກ ປະສົບສຸກສືບສ້າງ ເລີຍທຳເລື້ອຍສືບມາ **ນັ້ນແລ້ວ!**

## ຊອບຍິ້ມ

# ແອ່ນຕຸ້ງ

**ເລື່ອງ: ເງິນເຢັນ**

ທິດເອນ ພາເມຍໄປຕະຫລາດເຊົ້າ ລາວສັງເກດເຫັນເມຍຈ້ອງໆມອງໆເບິ່ງສິ້ນໄໝເປັນຕັ້ງ 10 ນາທີ

**ທິດເອນ:** ນ້ອງມັກບໍ່?

**ເມຍ:** ມັກລະເນາະສິ້ນໄໝງາມປານນີ້

**ທິດເອນ:** ຄັນມັກມື້ອື່ນອ້າຍຊິພາມາເບິ່ງອີກ

**ເມຍ:** ອ້າຍຜີບ້າເອີຍ! ຄິດວ່າຊິຊື້ໃຫ້

**ທິດເອນ:** ຊິຊື້ຈັ່ງໃດ ນ້ອງກະຮູ້ວ່າເງິນເດືອນອ້າຍບໍ່ອອກ 3 ເດືອນແລ້ວ



## ຄະຕິເຕືອນໃຈ

# ດອກລະຍອມ

ຊື່ວ່າເປັນຄົນນີ້ໃຫ້ ທຳນຽມນາມເຕົ່າ
ມັນຫາກມ້ຽນໄຊໄວ້ ເສຍແລ້ວຈຶ່ງຄ່ອຍໜີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 09 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 16 ພະຈິກ 2021

## ກົດໝາຍ
## ວ່າດ້ວຍການຄວບຄຸມຢາສູບ
## (ສະບັບປັບປຸງ)

### ພາກທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ,ຕິດຕາມກວດກາ ວຽກງານຄວບຄຸມຢາສູບ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຫຼຸດຜ່ອນ ການຊົມໃຊ້ຢາສູບ, ຄ່າໃຊ້ຈ່າຍທີ່ບໍ່ຈຳເປັນ, ປົກປ້ອງ, ສົ່ງເສີມໃຫ້ພົນລະ ເມືອງ ມີສຸຂະພາບດີ ແລະ ປົກປັກຮັກສາສິ່ງແວດລ້ອມ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະ ກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 (ປັບປຸງ) ການຄວບຄຸມຢາສູບ**

ຢາສູບ ແມ່ນຜະລິດຕະພັນ ທີ່ຖືກປຸງແຕ່ງຈາກໃບຢາສູບ ທັງໝົດ, ບາງສ່ວນ ແລະ ຜະລິດຕະພັນຢາສູບຮູບແບບອື່ນ ທີ່ມີສານນິໂຄຕິນເປັນສ່ວນປະກອບ ຊຶ່ງເປັນທາດເບື່ອ ແລະ ເປັນສິ່ງເສບຕິດ.

ການຄວບຄຸມຢາສູບ ແມ່ນ ການນຳໃຊ້ມາດຕະການໃນການຄຸ້ມຄອງ, ຕິດຕາມ, ກວດກາ ການຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ, ຊື້-ຂາຍ, ໂຄສະນາສົ່ງເສີມ ແລະ ອຸປະຖຳ ຜະລິດຕະພັນຢາສູບ, ພິມຄຳເຕືອນສຸຂະພາບ, ສະຫຼາກ, ສະຖານທີ່ຫ້າມສູບຢາ ແລະ ການນຳໃຊ້ມາດຕະການອື່ນ ເພື່ອຫຼຸດຜ່ອນການຊົມໃຊ້ຢາສູບ, ຜົນຮ້າຍທີ່ເກີດຈາກການຊົມໃຊ້ຜະລິດຕະພັນຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ການຊົມໃຊ້ຢາສູບ ໝາຍເຖິງ ການສູບ, ຄ້ຽວ, ອົມ, ດົມ, ດູດ, ກິນ, ສູດ, ຖູນ, ທາ, ຮົມ ຫຼື ພົ່ນເຂົ້າໄປໃນຮ່າງກາຍ ໂດຍຜ່ານປາກ ຫຼື ດັງ ຫຼື ວິທີການອື່ນ ທີ່ພາໃຫ້ເກີດຄວັນ ຫຼື ບໍ່ເກີດຄວັນ;
2. ຄວັນຢາສູບມືສອງ ໝາຍເຖິງ ຄວັນຢາສູບທີ່ພົ່ນອອກຈາກຜູ້ສູບຢາ ຫຼື ຄວັນອອກຈາກກອກຢາສູບທີ່ຈູດປະໄວ້;
3. ການໄດ້ຮັບຄວັນຢາສູບມືສອງ ໝາຍເຖິງ ຜູ້ບໍ່ສູບຢາ ໄດ້ຮັບຄວັນທີ່ພົ່ນອອກຈາກຜູ້ສູບຢາ ຫຼື ຄວັນອອກຈາກກອກຢາສູບທີ່ຈູດປະໄວ້;
4. ຜະລິດຕະພັນຢາສູບຮຽນແບບ ໝາຍເຖິງ ຜະລິດຕະພັນຄ້າຍຄືຜະລິດຕະພັນຢາສູບ;
5. ເຄື່ອງຈັກຂາຍຢາສູບແບບອັດຕະໂນມັດ ໝາຍເຖິງ ເຄື່ອງຈັກຂາຍຜະລິດຕະພັນຢາສູບ ທີ່ຜູ້ຊົມໃຊ້ ສາມາດຊື້ໄດ້ ດ້ວຍການນຳໃຊ້ເງິນສົດ, ຢອດຫຼຽນ ຫຼື ບັດສະເພາະ;
6. ຜູ້ປະກອບການ ໝາຍເຖິງ ຜູ້ຜະລິດ, ນຳເຂົ້າ, ສົ່ງອອກ, ຂາຍຍົກ, ຈຳໜ່າຍ ແລະ ຊື້ ຂາຍ ຜະລິດຕະພັນຢາສູບ;
7. ຢາສູບນອກລະບົບ ໝາຍເຖິງ ຜະລິດຕະພັນຢາສູບທີ່ລັດບໍ່ເກືອດຫ້າມ ແຕ່ມີການຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ ແລະ ຊື້-ຂາຍ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
8. ຢາສູບເຖື່ອນ ໝາຍເຖິງ ຜະລິດຕະພັນຢາສູບແບບອຸດສາຫະກຳ ແລະ ຫັດຖະກຳ ທີ່ບໍ່ໄດ້ຮັບອະນຸຍາດໃຫ້ຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ ແລະ ຊື້ ຂາຍ;

ອ່ານຕໍ່ສະບັບໜ້າ...




## ແດດໝົກເຖົ່າ

**ໂດຍ: ດັ້ນກົບເມກ**

ຜູ້ຂຽນສັງເກດເບິ່ງສະພາບເງື່ອນໄຂການທຳມາຫາກິນທີ່ຍັງຝືດເຄືອງສຳລັບຜູ້ໃຊ້ແຮງງານຫາເຊົ້າກິນຄ່ຳ ຫລື ບາງປະເພດ ທ້ອງເຊົ່າ-ເຂົ້າຊື້ ຫລືວ່າພະນັກງານເງິນເດືອນໜ້ອຍ; ເມື່ອເງິນເດືອນອອກກໍໝູນໃຊ້ເງິນບາງຄັ້ງໄປຂາດແຄນທ້າຍເດືອນ ພາໃຫ້ເກີດແງ່ຄິດໄດ້ວ່າ: ເປັນພາວະອຶມຄຶມ ຖ້າທຽບໃສ່ແສງອາທິດຄືງບໍ່ຕ່າງກັບແດດໝົກເຖົ່າຄືນບູຮານສອນໄວ້ ເຊິ່ງເບິ່ງຄືວ່າມັນບໍ່ມີແສງແດດເຈີດຈ້າແຕ່ວ່າມີອຸນຫະພູມຮ້ອນໃໝ້ເມື່ອຜິວເຮົາໄດ້ສຳຜັດ.

ຜູ້ຂຽນເຄີຍໄດ້ຍິນຄົນເຖົ້າເວົ້າສົນທະນາກັນວ່າ: ແຜ່ນດິນໄຂ້ສິຫາຢາຫຍັງມາໃສ່...? ແຜ່ນດິນທີ່ຂາດຄວາມອຸດົມສົມບູນອາດຕ້ອງການຜືນປ່າ-ແມ່ນ້ຳ ມາຢຽວຢາໃຫ້ເກີດຄວາມຊຸ່ມຊື່ນ ແຕ່ຖ້າວ່າສັງຄົມປ່ອຍດ້ວຍພະຍາດຜິດເສດຖະກິດຮຸນແຮງເຮົາຈະປິ່ນປົວຮັກສາແນວໃດ? ຖ້າປະປ່ອຍໄປຕາມຍະຖາກຳກໍຈະມີພາວະແດດໝົກເຖົ່າ ເຊິ່ງບໍ່ຕ່າງກັບຝີຫົມໝອງໃຜເປັນກໍທໍລະມານເຈັບປວດ, ຢ່າລືມວ່າບາງພະຍາດ-ອາການປ່ອຍມັນຝັງລຶງເລິກຖ້າບໍ່ແກ້ໄຂ ເບິ່ງແຍງໃຫ້ດີບາງທີກໍແຜ່ລາມໄປເປັນພະຍາດອື່ນ, ການໃຊ້ທິດສະດີໃນໃຈວ່າມີໃຜຍາວສາວໄດ້ສາວເອົາ, ສຸກງ່າໃດກິນງ່ານັ້ນ ມັນອາດດີສຳລັບຜູ້ມີໃຫຍ່ແຕ່ຜູ້ຍື້ບໍ່ເຖິງຜັດມີຫລາຍມີກວ່າ.

ຜູ້ຢູ່ລຸ່ມເຖິງສິນອນຫງາຍຢູ່ຕະຫລອດກໍໄດ້ແຕ່ຫລຽວເບິ່ງຜູ້ຢູ່ເທິງເຖິງຈະນອນຂວ້ຳແຕ່ຜັດຫລັບຕາເຮັດແນວໃດກໍບໍ່ເຫັນສິ່ງທີ່ເກີດຂຶ້ນຢູ່ກ້ອງຕາລ່າງເຮືອນ ຫລື ບາງເທື່ອເຫັນກໍເລືອນລາງຈືດຈາງ, ເມື່ອເຮົາເວົ້າຄວາມເກົ່າກໍເພື່ອເລົ່າທວນຄືນບໍ່ໃຫ້ລືມ ຍົກຕົວຢ່າງ: ການປະພຶດຂອງພະເວດສັນດອນໃນຖານະຜູ້ປົກຄອງ ເຊິ່ງສະທ້ອນໃຫ້ເຫັນວິທີສອນຄົນໃກ້ໂຕທັງລູກ ແລະ ເມຍ ໃຫ້ເຫັນສ່ວນລວມ ຫລື ໃນໂຕພະເຫວດເອງກໍໄດ້ປະພຶດເປັນແບບຢ່າງໂລດ.

ຜູ້ຂຽນ ຂໍສັງລວມເອົາຕົວຢ່າງພະພຸດທະເຈົ້າທີ່ເປັນສາມາດສ້າງ-ຮັກສາສັດທາ-ເຜີຍແຜ່ພຸດທະສາສະໜາໄດ້ເພາະເພິ່ນໄດ້ປະກາດແຈ້ງໄວ້ວ່າ: ຍະຖາວາທີຕະຖາກາລີ ແປວ່າ: ເວົ້າແນວໃດກໍປະພຶດແນວນັ້ນ, ຍະຖາກາລີຕະຖາວາທີ: ປະພຶດແນວໃດກໍເວົ້າແນວນັ້ນ ຄືຄຳເວົ້າກັບການກະທຳມັນສອດຄ່ອງກັນ!

### ຮຽນຮູ້ຄຳສັບທາງກົດໝາຍ



**ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນຸຄຳ ພິພັດເສລີ**

21. ການພິສູດ ໝາຍເຖິງ ການນຳໃຊ້ວິທີການທາງດ້ານເຕັກນິກວິທະຍາສາດ, ວິຊາການ, ສິລະປະ ແລະ ອື່ນໆ ເພື່ອຢັ້ງຢືນຄວາມຖືກຕ້ອງ ຫລື ບໍ່ຖືກຕ້ອງ ຂອງເປົ້າໝາຍໃດໜຶ່ງ;

22. ຄຳຕົກລົງຂອງສານ ໝາຍເຖິງ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ;

## ຫລາຍບັນຫາ...

ເລືອກຕັ້ງ; ເຂົ້າຮ່ວມມີທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ; ທ່ານ ກອງແກ້ວ ໄຊສົງຄາມ ເຈົ້າແຂວງບໍລິຄຳໄຊ; ມີບັນດາທ່ານການນຳຂອງແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ເຈົ້າເມືອງ, ຫົວໜ້າພະແນກການ, ຕາງໜ້າອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ວິສາຫະກິດທັງພັກ-ລັດ ແລະ ເອກະຊົນ ພ້ອມດ້ວຍແຂກຖືກເຊີນ.

ກອງປະຊຸມ, ໄດ້ຮັບຟັງການລາຍງານ ແລະ ຮັບຮອງເອົາບັນຫາສຳຄັນຕ່າງໆຂອງແຂວງ ດັ່ງນີ້:

1. ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022.

2. ຮັບຟັງການລາຍງານຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຕິດຕາມ ກວດກາການດຳເນີນຄະດີ ຂອງອົງການສືບສວນ, ສອບສວນ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ ປະຈຳ 6 ເດືອນທ້າຍປີ 2022.

3. ຮັບຟັງການລາຍງານຂອງສານປະຊາຊົນແຂວງ ກ່ຽວກັບການແກ້ໄຂຄະດີທີ່ມີຄວາມຫຍຸ້ງຍາກ ໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ.

4. ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດກ່ຽວກັບການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ຕະຫລອດໄລຍະຜ່ານມາ.

5. ຮັບຮອງເອົາບົດລາຍງານຂອງພະແນກສຶກສາທິການ ແລະ ກິລາແຂວງ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍຂະແໜງສຶກສາທິການ ແລະ ກິລາ, ການປັບປຸງຄຸນນະພາບລະບົບການຮຽນ-ການສອນໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກຳຢູ່ພາຍໃນແຂວງ.

6. ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວຽກງານ ໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ ຂອງຫ້ອງການບໍລິຫານເອກະສານຜ່ານປະຕູດຽວ.

7.ຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ທິດທາງແຜນການ ຫາກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II.

8. ກອງປະຊຸມ ໄດ້ຮັບຮອງເອົານິຕິກຳຂອງແຂວງ ຈຳນວນ 4 ສະບັບ ຄື: ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການກຳນົດລະບຽບການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບກ່ຽວກັບສິ່ງແວດລ້ອມ, ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງການລົງທຶນດ້ານກະສິກຳ ຕາມຮູບແບບສັນຍາ, ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ, ປົກປັກຮັກສາປ່າສະຫງວນຫ້ວຍງົວ ແລະ ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງລົດຮັບ-ສົ່ງນັກຮຽນ;

ພ້ອມນັ້ນ, ຍັງໄດ້ຮັບຟັງການອະທິບາຍ, ຊີ້ແຈງຈາກການນຳຂອງແຂວງ, ພະແນກການທີ່ກ່ຽວຂ້ອງຕໍ່ກັບຄຳສະເໜີຂອງສະມາຊິກສະພາປະຊາຊົນແຂວງ ທີ່ຕາງໜ້າໃຫ້ແກ່ປະຊາຊົນບັນດາເຜົ່າໃນທົ່ວແຂວງ; ພ້ອມນີ້, ໃນໄລຍະດຳເນີນກອງປະຊຸມຍັງໄດ້ຮັບຄຳສະເໜີຂອງປະຊາຊົນຜ່ານສາຍດ່ວນໝາຍເລກ 054 156 ມີຈຳນວນ 18 ສາຍ, ສັງລວມແລ້ວມີ 10 ເລື່ອງ.

ກອງປະຊຸມໄດ້ສະແດງຄວາມຂອບໃຈຢ່າງສູງມາຍັງບັນດາທ່ານການນຳຂອງແຂວງ, ບັນດາທ່ານແຂກທີ່ມີກຽດ ທີ່ໄດ້ໃຫ້ການຕິດຕາມຢ່າງໃກ້ສິດ ແລະ ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້, ສະແດງຄວາມຂອບໃຈ ພໍ່ແມ່ປະຊາຊົນບັນດາເຜົ່າທົ່ວແຂວງບໍລິຄຳໄຊ ທີ່ໄດ້ເອົາໃຈໃສ່ຕິດຕາມ ແລະ ສົ່ງຄວາມຄິດເຫັນທີ່ເປັນປະໂຫຍດ ໂດຍຜ່ານໂທລະສັບສາຍດ່ວນ ແລະ ຈາກສື່ຕ່າງໆມາຍັງກອງປະຊຸມ ເຊິ່ງຄວາມຄິດ, ຄວາມເຫັນດັ່ງກ່າວ, ຄະນະປະຈຳສະພາປະຊາຊົນແຂວງ ຈະສືບຕໍ່ປະສານສົມທົບກັບອົງການປົກຄອງແຂວງ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ, ພິຈາລະນາແກ້ໄຂຕາມຄວາມເໝາະສົມ, ຂໍສະແດງຄວາມຂອບໃຈກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ສື່ມວນຊົນ, ແພດໝໍ ແລະ ພາກສ່ວນກ່ຽວຂ້ອງ ໄດ້ພ້ອມກັນປະຕິບັດໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ ປະກອບສ່ວນເຮັດໃຫ້ກອງປະຊຸມຄັ້ງນີ້ມີຄວາມສະຫງົບປອດໄພ ແລະ ຜົນສຳເລັດຢ່າງຈົບງາມ.

## ສະພາແຫ່ງຊາດ...

ຄະນະໜ່ວຍພັກຮາກຖານ, ສະມາຊິກພັກສົມບູນ, ສຳຮອງ ແລະ ພະນັກງານ-ລັດຖະກອນ ພາຍໃນສະພາແຫ່ງຊາດເຂົ້າຮ່ວມ.

ໂອກາດດັ່ງກ່າວ ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ຍົກໃຫ້ເຫັນ ຄວາມໝາຍ, ຄວາມສຳຄັນ ແລະ ປະຫວັດຄວາມເປັນມາ ແຫ່ງການກຳເນີດ ແລະ ການຂະຫຍາຍຕົວຂອງລັດຖະທຳມະນູນ ແຫ່ງ ສປປລາວ ຕະຫລອດໄລຍະ 31 ປີ ທີ່ຍາດມາໄດ້ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເຊິ່ງໄດ້ຖືກຮັບ ຮອງ ໃນກອງປະຊຸມຄັ້ງທີ 6 ຂອງສະພາປະຊາຊົນສູງສຸດ ຊຸດທີ II ໃນປີ 1991 ແລະ ປະກາດໃຊ້ລັດຖະທຳມະນູນ ໃນວັນທີ 15 ສິງຫາ 1991, ຫລັງຈາກນັ້ນ, ມາຮອດທ້າຍປີ 1995, ສະພາແຫ່ງຊາດ ຊຸດທີ III ຈຶ່ງໄດ້ຕົກລົງກຳນົດເອົາວັນທີ 15 ສິງຫາ 1991 ເປັນວັນລັດຖະທຳມະນູນແຫ່ງຊາດ ແນໃສ່ທວນຄືນການປະຕິບັດລັດຖະທຳມະນູນ ໃນແຕ່ລະປີ ເຊິ່ງລັດຖະທຳມະນູນ ສະບັບທຳອິດ ປະກອບດ້ວຍ 10 ໝວດ 80 ມາດຕາ, ໄດ້ກຳນົດແຈ້ງ ລະບອບການເມືອງ, ລະບອບເສດຖະກິດ-ສັງຄົມ, ລະບົບການຈັດຕັ້ງກົງຈັກລັດ ປະຊາທິປະໄຕ ປະຊາຊົນ ໃນໄລຍະໃໝ່, ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ການຕ່າງປະເທດ, ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ, ພາສາ, ຕົວອັກສອນ, ເຄື່ອງໝາຍຊາດ, ທຸງຊາດ, ວັນຊາດ, ສະກຸນເງິນ ແລະ ນະຄອນຫລວງ. ລັດຖະທຳມະນູນ ເປັນກົດໝາຍພື້ນຖານຂອງຊາດ ທັງເປັນການຫັນແນວທາງປ່ຽນແປງໃໝ່ຢ່າງຮອບດ້ານ ທີ່ມີຫລັກການຂອງພັກປະຊາຊົນປະຕິວັດລາວ ມາເປັນກົດໝາຍພື້ນຖານຂອງລະບອບ ປະຊາທິປະໄຕ ປະຊາຊົນລາວ ເພື່ອສຶກສາອົບຮົມປະຊາຊົນລາວບັນດາເຜົ່າ ໃຫ້ຍົກສູງນ້ຳໃຈຮັກຊາດ, ຮັກລະບອບໃໝ່ ເພີ່ມທະວີຄວາມສາມັກຄີປອງດອງລາວທັງຊາດ, ເຊີດຊູບົດບາດເປັນເຈົ້າການໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຕາມຈຸດໝາຍທີ່ພັກໄດ້ກຳນົດໄວ້.

ການປະກາດໃຊ້ລັດຖະທຳມະນູນ ເປັນເຫດການການເມືອງທີ່ສຳຄັນຂອງຊາດ ທັງເປັນຂີດໝາຍໃໝ່ແຫ່ງການຫັນໄປສູ່ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ດ້ວຍກົດໝາຍ ແລະ ສ້າງລັດແຫ່ງກົດໝາຍເທື່ອລະກ້າວ, ສ່ອງແສງໃຫ້ເຫັນເຖິງລັກສະນະທາດແທ້ ແລະ ການເຕີບໃຫຍ່ຂະຫຍາຍຕົວຂອງລະບອບປະຊາທິປະໄຕປະຊາຊົນລາວ ພາຍໃຕ້ການນຳພາອັນຖືກຕ້ອງ ຂອງພັກປະຊາຊົນປະຕິວັດລາວ ທັງເປັນການຢັ້ງຢືນຕໍ່ໂລກກ່ຽວກັບຄວາມເປັນເອກະລາດ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງ ສປປລາວ.

ໂອກາດດຽວກັນ, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຍັງໄດ້ຍົກໃຫ້ເຫັນມູນເຊື້ອ ຄວາມໝາຍຄວາມສຳຄັນ ຂອງວັນຍຶດອຳນາດ 23 ສິງຫາ ເຊິ່ງແມ່ນໝາກຜົນຂອງການຕໍ່ສູ້ແຫ່ງການປະຕິວັດ ອັນຍຶດເຍື້ອຍາວນານ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ທີ່ເຕັມໄປດ້ວຍຄວາມອົງອາດກ້າຫານ ຂອງປະຊາຊົນລາວບັນດາເຜົ່າ ໃນການຕໍ່ສູ້ປົກປັກຮັກສາປະເທດຊາດ ເຊິ່ງສະແດງອອກໃຫ້ເຫັນເຖິງຜົນງານຕໍ່ສູ້ຢ່າງກ້າຫານ, ບໍ່ຍອມຈຳນົນ ແລະ ມີນ້ຳໃຈຮັກຊາດ ປະກອບສ່ວນສຸມທຸກກຳລັງເຫື່ອແຮງເຂົ້າໃນການຕໍ່ສູ້ປົກປັກຮັກສາປະເທດຊາດ, ໄດ້ນຳໃຊ້ 3 ບາດຄ້ອນຍຸດທະສາດ ບຸກໂຈມຕີ ແລະ ການໝູນໃຊ້ທິດສະດີມາກ-ເລນິນ ຢ່າງປະດິດສ້າງແທດເໝາະກັບຈຸດພິເສດ ແລະ ສະພາບເງື່ອນໄຂຂອງປະເທດລາວ, ເປັນການໄຂສັງກາດໃໝ່ ອັນສະຫວ່າງສະໄຫວ ໃຫ້ປະຊາຊົນລາວ ໄດ້ມີຄວາມເປັນເອກະລາດ ມີອຳນາດອະທິປະໄຕ, ເປັນເຈົ້າຕົນເອງ, ນຳພາປະຊາຊົນລາວບັນດາເຜົ່າ ທົ່ວປະເທດ ກ້າວເຂົ້າສູ່ລະບອບປະຊາທິປະໄຕ ຈົນເຖິງປັດຈຸບັນ.

(ຂ່າວ: ນາງ ໄຊໂສພາພອນ ມິ່ງມຸງຄຸນ,
ຮູບ: ສົມນຶກ ແກ້ວໄຊຍະຈັກ)

# ພັດທະນາການພົວພັນມິດຕະພາບ, ການຮ່ວມມື ລະຫວ່າງຫວຽດນາມ ແລະ ກາຊັກສະຖານ

ແປ ແລະ ຮຽບຮຽງ: ທະນາພອນ



ໃນວັນທີ 18 ສິງຫາ 2022 ຢູ່ທຳນຽບປະທານປະເທດຫວຽດນາມ, ທ່ານ ຫງວຽນ ຊວນຟຸກ ປະທານປະເທດຫວຽດນາມ ໄດ້ໃຫ້ການຕ້ອນຮັບທ່ານ Mukhtar Tileuberdi ຮອງນາຍົກລັດຖະມົນຕີ, ລັດຖະມົນຕີການຕ່າງປະເທດກາຊັກສະຖານ ເນື່ອງໃນໂອກາດມາຢ້ຽມຢາມຫວຽດນາມ ຢ່າງເປັນທາງການ ໃນລະຫວ່າງວັນທີ 17-18 ສິງຫາ 2022.

ໃນການຕ້ອນຮັບ, ທ່ານ ຫງວຽນ ຊວນຟຸກ ໄດ້ຕີລາຄາສູງການຢ້ຽມຢາມຫວຽດນາມຄັ້ງທຳອິດຂອງຮອງນາຍົກລັດຖະມົນຕີ, ລັດຖະມົນຕີການຕ່າງປະເທດ ກາຊັກສະຖານ ກົງກັບໂອກາດສະເຫລີມສະຫລອງ 30 ປີ ແຫ່ງວັນສ້າງຕັ້ງການພົວພັນທາງການທູດ ລະຫວ່າງສອງປະເທດ (1992-2022).

ປະທານປະເທດ ໄດ້ສະເໜີໃຫ້ສອງຝ່າຍເສີມຂະຫຍາຍທ່າໄດ້ປຽບຂອງສັນຍາການຄ້າເສລີລະຫວ່າງຫວຽດນາມ ແລະ ສະຫະພັນເສດຖະກິດອາຊີ-ເອີລົບ (EAEU) ເຊິ່ງກາຊັກສະຖານ ກໍເປັນປະເທດສະມາຊິກ. ທ່ານປາຖະໜາວ່າ ສອງຝ່າຍຊຸກຍູ້ການຮ່ວມມືໃນຂົງເຂດມີຄວາມສາມາດບົ່ມຊ້ອນ ແລະ ມີທ່າແຮງ ຄື: ກະສິກຳ, ການທ່ອງທ່ຽວ, ການຂົນສົ່ງ..., ຊຸກເຊີຍແຜນການເປີດສາຍການບິນໂດຍກົງລະຫວ່າງຫວຽດນາມ ແລະ ກາຊັກສະຖານ.

ສ່ວນທ່ານ Mukhtar Tileuberdi ຢັ້ງຢືນວ່າ ຫວຽດນາມ ແມ່ນຄູ່ຮ່ວມມືສຳຄັນສຳລັບ ກາຊັກສະຖານ ຢູ່ພາກພື້ນອາຊີ-ປາຊີຟິກ; ທ່ານເນັ້ນໜັກວ່າ ກາຊັກສະຖານ ປາຖະໜາຢາກຍູ້ແຮງການຮ່ວມມືກັບຫວຽດນາມ ໃນບັນດາຂົງເຂດ ຄື: ເສດຖະກິດ-ການຄ້າ, ການລົງທຶນ, ການເງິນ, ການສຶກສາ-ບຳລຸງສ້າງ, ວັດທະນະທຳ-ທ່ອງທ່ຽວ, ຄົມມະນາຄົມຂົນສົ່ງ, ພະລັງງານສະອາດ, ເຕັກໂນໂລຢີສູງ.

**ແຫລ່ງຂ່າວ: ກປ.ອອນລາຍ**

# ລັດຖະບານຟີລິບປິນສະເໜີແຜນງົບປະມານ 2023 ຕໍ່ລັດຖະສະພາ

ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ

ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ວັນທີ 22 ສິງຫາຜ່ານມາ, ລັດຖະສະພາຟີລິບປິນ ໄດ້ຮັບຟັງການສະເໜີແຜນງົບປະມານແຫ່ງລັດ ປະຈຳປີ 2023 ຈາກພາກສ່ວນຄຸ້ມຄອງງົບປະມານຟີລິບປິນ ມີມູນຄ່າ 5.268 ຕື້ເປໂຊ, ແຜນງົບປະມານສະບັບນີ້ເທົ່າກັບ 22,2% ຂອງຍອດປະລິມານເສດຖະກິດທົ່ວປະເທດຟີລິບປິນ ແລະ ເປັນຈຳນວນຫລາຍກວ່າເກືອບ 5% ເມື່ອທຽບໃສ່ແຜນງົບປະມານ ປີ 2022 ເຊິ່ງເປັນການສະເໜີແຜນງົບປະມານແຫ່ງລັດເປັນເທື່ອທຳອິດຂອງລັດຖະບານຟີລິບປິນ ນັບແຕ່ທ່ານ ເຟີດີນານດ໌ ໂຣມົວເດສ ມາກ໋ອດ ປະທານາທິບໍດີຟີລິບປິນ ຂຶ້ນຮັບຕຳແໜ່ງ ໂດຍມີຈຸດປະສົງເພື່ອຊຸກຍູ້ໃຫ້ເສດຖະກິດພັດທະນາ ແລະ ຫລຸດຜ່ອນຄວາມທຸກຍາກ. ນອກນີ້, ການສຶກສາ, ພື້ນຖານໂຄງລ່າງ, ຄວາມໝັ້ນຄົງຂອງອາຫານ, ການປິ່ນປົວ ແລະ ສຸຂາພິບານ ພ້ອມທັງພະລັງງານແບບສະອາດກໍແມ່ນເນື້ອໃນສຳຄັນຂອງແຜນງົບປະມານ ປີ 2023.

ໃນຖະແຫລງການສະບັບໜຶ່ງທີ່ກ່ຽວຂ້ອງກັບແຜນງົບປະມານດັ່ງກ່າວ, ທ່ານ ເຟີດີນານດ໌ ໂຣມົວເດສ ມາກ໋ອດ ໄດ້ກ່າວວ່າ: ພາກສ່ວນສຶກສາທິການຈະໄດ້ຮັບງົບປະມານຫລາຍກວ່າໝູ່ ໂດຍມີມູນຄ່າ 852,8 ຕື້ເປໂຊ, ກວມ 16% ຂອງແຜນງົບປະມານທັງໝົດ ຖັດມາແມ່ນພາກສ່ວນໂຍທາທິການ ກວມ 13% ການປິ່ນປົວ ແລະ ສຸຂາພິບານ ກວມ 5%, ສະຫວັດດີການທາງສັງຄົມ ກວມປະມານ 4% ແລະ ກະສິກຳຈະໄດ້ຮັບມູນຄ່າ 184,1 ຕື້ເປໂຊ, ເພີ່ມຂຶ້ນ 40% ເມື່ອທຽບໃສ່ແຜນງົບປະມານ ປີ 2022.

**ແຫລ່ງຂ່າວ: CRI**



**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 36 / ສພຊ
ນະຄອນຫຼວງວຽງຈັນ, ວັນທີ 16 / 11 / 21

**ມະຕິ**
**ຂອງກອງປະຊຸມສະພາແຫ່ງຊາດ**
**ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຄວບຄຸມຢາສູບ**
**(ສະບັບປັບປຸງ)**

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ) ໃນວາລະຕອນເຊົ້າຂອງກອງປະຊຸມ ຂອງວັນທີ 12 ພະຈິກ 2021 ແລະ ຖືກພິຈາລະນາຮັບຮອງເອົາ ໃນວາລະຕອນບ່າຍຂອງກອງປະຊຸມ ຂອງວັນທີ 16 ພະຈິກ 2021.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

---

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 240 /ປປທ
ນະຄອນຫຼວງວຽງຈັນ, ວັນທີ 29 ທັນວາ 2021

## ລັດຖະດຳລັດ
## ຂອງປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ ກົດໝາຍ ວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 36/ສພຊ, ລົງວັນທີ 16 ພະຈິກ 2021 ກ່ຽວກັບການຮັບຮອງ ເອົາກົດໝາຍວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 16/ຄປຈ, ລົງວັນທີ 15 ທັນວາ 2021.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ ກົດໝາຍ ວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ).
ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ທອງລຸນ ສີສຸລິດ

ຜູ້ຊີ້ນຳ
ທ່ານ ສິງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

ຫົວໜ້າບັນນາທິການ
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

ກອງບັນນາທິການ
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

ອອກແບບຈັດໜ້າ
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ